# ຄວາມທວາຍບູຮານ

ຈ. ອິນທຸພິລາສ ຜູ່ຮິບໂຮມ



**250** ກີບ

# ຄວາມເຫັນຂອງຜູ່ຈັດພິມ

ກ່ອນຈະໄດ້ເປັ່ນປຶ້ມນ້ອຍເຫຼັ້ມນີ້ ແຮກທຳອິດມັ້ນທາງໜັງສືພິມໄຜ່ໜາມສະບັບສັງຄົມວິຈານ ໄດ້ຮັບຄວາມເອື້ອເຟື້ອຈາກ ມະຫາຈັນທ໌ ອິນທຸພິລາສ ຊອກຄົ້ນຮິບໂຮມເອົາຄວາມທວາຍທີ່ສາມາດຊອກໄດ້ ມາລົງພິມຕິດຕໍ່ກັນມາແລ້ວຫລາຍສະບັບ ຕັ້ງແຕ່ໃນປີ ໑໙໗໔ ແລະຢຸດພັກຂາດຕອນໄປແດ່ແລ້ວຈຶ່ງມາຄົ້ນໄດ້ຕື່ມອີກ ເມື່ອກາງ ໆ ປີ ໑໙໗໖ (ໃນໄຜ່ໜາມຣາຍເດືອນ)

ເນື່ອງຈາກມີຄວາມຕ້ອງການໃຫ້ວັທນະທັມອັນເກົ່າແກ່ຂອງລາວຍືນຍົງຄົງຢູ່ຄູ່ຊາດບ້ານເມືອງ ທາງສຳນັກພິມໄຜ່ໜາມ ຈຶ່ງໄດ້ຈັດເອົາຄວາມທວາຍຈາກການຮິບໂຮມ ຊອກຄົ້ນດ້ວຍຄວາມອົດສາພາກພຽນຂອງທ່ານຜູ້ນີ້ມາໂຮມພິມເປັ່ນເຫຼັ້ມຂຶ້ນ ດັ່ງທີ່ປາກົດຢູ່ຕໍ່ໜ້າທ່ານຜູ້ອ່ານຂນະນີ້

ຄວາມແມ່ນແທ້ແລ້ວ ຄວາມທວາຍນີ້ນັບເປັ່ນວັທນະທັມອັນນຶ່ງຂອງຊົນຊາດລາວ ຊ້ຳຍັງມີຄຸນຄ່າເປັ່ນຫລັກຖານທາງພາສາ ແລະມີເງື່ອນສັ້ນໂຄງຮ່າງຂອງປະເພນີລາວອີກຫລາຍດ້ານຫລາຍແງ່ ທີ່ເຊື່ອງແຝງແກມຢູ່ໃນນັ້ນ ທັງໂດຍເຈຕນາແລະບໍ່ເຈຕນາ

ດັ່ງນັ້ນຈຶ່ງເຫັນສົມຄວນວ່າ ການຈັດພິມເປັ້ນເຫລັ້ມ ເພື່ອໃຫ້ຄຸນຄ່າທາງວັທນະທັມເກົ່າແກ່ເຫລົ່ານັ້ນ ຍືນຍູ່ຕໍ່ໄປ ຍ່ອມເປັ່ນໜ້າທີ່ໂດຍກົງຂອງຄົນລາວຜູ້ຮັກເຊື້ອຊາດພາສາລາວໂດຍບໍ່ມີລ່ຽມກົນມາຍາ

ໃນການຕັ້ງສຳນັກພິມໄຜ່ພາມຂຶ້ນ ກໍແມ່ນດ້ວຍຈຸດປະສົງອັນນີ້ເປັ່ນສຳຄັນ ແລະດ້ວຍເຈຕນາທີ່ຈະເຜີຍແຜ່ ຍົກຍ້ອງ ສົ່ງເສີມ ຄຸນຄ່າຄວາມເປັ່ນລາວໃນດ້ານ ວັທນະທັມແລະພາສາ ຈຶ່ງຫວັງຢ່າງສຸຈຣິດໃຈວ່າ ສຳນັກພິມໄຜ່ພາມແລະ "ຄວາມທວາຍບູຮານ" ຕລອດຈົນສິ່ງອື່ນ ໆ ທີ່ໄຜ່ພາມຈັດພິມຂຶ້ນ ຈະໄດ້ຮັບຄວາມອູ້ມຊູສົ່ງເສີມຈາກພີ່ນ້ອງລາວຜູ້ຮັກຕົວເອງ ແລະສົມບັດດ້ານວັທນະທັມ ຂອງຊາດຕົນຕາມສົມຄວນ.

ດ້ວຍຄວາມປຣາຖນາດີຕໍ່ຜູ້ອ່ານທຸກຖ້ວນໜ້າ

*ນາງ ດາຣາ ກັລຍາ*

ສຳນັກພິມ ໄຜ່ພາມ

*ຕູ້ປ.ນ.* **230** *ວຽງຈັນ*

*ຕຸລາ* **2516/1973**

# ຄຳອະທິບາຍເບື້ອງຕົ້ນ

ຄວາມທວາຍຫລືຈະວ່າ ບັນຫາມ່ອນການກາງບ້ານກໍໄດ້ ເປັ່ນຂອງມີມາແຕ່ເຫິງ ກຳນົດກາລະສມັຍບໍ່ໄດ້ມັກທວາຍກັນຫລິ້ນລະຫວ່າງເດັກນ້ອຍຍາມລ້ຽງຄວາຍ ຫລືບ່າວສາວຍາມໄປຫລິ້ນນຳກັນກ່ອນທີ່ຈະເຂົ້າຄູ່ໃຜຄູ່ມັນ ຫລືຍາມມີບຸນຕາມເຮືອນ ຍາມງັນກຳ ງັນເຮືອນດີເປັ່ນຕົ້ນ ເຊິ່ງແຕກຕ່າງຈາກສມັຍນີ້ ທີ່ເອົາໄມ້ເປັ່ນຄວາມທວາຍກັນ

ຄວາມທວາຍທີ່ເກັບຮິບໂຮມມາໄວ້ນີ້ ມີຂໍ້ຄວນຄິດຫລາຍແນວ ຂໍ້ນຶ່ງສະແດງເຖິງຄວາມເປັ່ນນັກກອນ ນັກກາບຂອງລາວ ທຸກໆຄວາມທວາຍ ຈະມີຮູບຮອຍເປັ່ນກາບເປັ່ນກອນທັງນັ້ນ ຈະເປັ່ນຄວາມທວາຍສັ້ນຫລືຍາວກໍຕາມ ຂໍ້ສອງຄວາມທວາຍມັກເປັ່ນຄຳລາວ ຄວາມລາວບໍຣິສຸດ ຈະບໍ່ເຫັນຄຳປາລີ ຫລືສັນສະກຣິດແກມ ຢ່າງໝວດຂັ້ນຕົ້ນ ກ. ທີ່ຍົກມາໃຫ້ເຫັນເທື່ອທຳອິດນີ້ ເກືອບບໍ່ມີຄຳປາລີສັນສະກຣິດແກມເລີຍສະແດງໃຫ້ເຫັນວ່າ ເປັ່ນຄຳທວາຍທີ່ຜູກຂຶ້ນ ໂດຍໄທບ້ານທີ່ຫ່າງໄກຈາກແສງສີຂອງນັກພາສາເອົາແທ້ໆ ຂໍ້ສາມ ຄວາມທວາຍເປັ່ນເຄື່ອງສ່ອງໃຫ້ເຫັນພູມປັນຍາຂອງຜູ່ຜູກຄວາມທວາຍ ເຫັນເຈຕນາຂອງຜູ່ຜູກຄວາມທວາຍເຮັດໃຫ້ເໝາະສົມສຳລັບເດັກ ສຳລັບບ່າວ

ສາວບໍ່ມີບັນຫາການບ້ານ ການເມືອງ ການຄອງຊີບ ເຂົ້າໄປແກມ ຈຶ່ງຈະເຮັດໃຫ້ຄຶດໜັກສມອງ ຫຍຸ້ງຍາກຫົວໃຈເກີດຄວາມທຸກໃຈສັງເລີຍ ສົມກັບເປັນຄວາມທວາຍເພື່ອຫາຄວາມມ່ວນຊື່ນເອົາແທ້ໆ ຄວາມທວາຍລາງຂໍ້ເຮົາຈະເຫັນຄວາມລະອຽດ ລະອໍເລີກເຊິ່ງ ຍາກພໍສົມຄວນ ແຕ່ເມື່ອແກ້ໃຫ້ພັ່ງແລ້ວມັ້ນແຫລະ ຈຶ່ງຈະເຫັນຄວາມວິເສດຂອງຄວາມທວາຍລາງຄຳທວາຍທີ່ເຮົາຄຶດບໍ່ເຫັນຄຳແກ້ ແລະເຫັນຖ້ອຍຄຳທີ່ຫຍາຍ ໆ ເຮີໆ (ເຮົາຄຶດໄປເອງ)ແດ່ ໂດຍຈຳເພາະພວກຜູ້ຍິງມັ້ນແຫລະຕ້ອງໜ້າແດງ ອ້າຍບ່າວທີ່ທວາຍຈະຕ້ອງຖ້າຖອຍຫລົບເລັບ ຫລົບຜ່າມືຫລືບາງເທື່ອກໍ່ອາດເປັນມິດສະນາກກໍໄດ້ ຂໍຍົກມາໃຫ້ເຫັນຈັກສອງສາມຂໍ້

— ສຽກແພ້ແວ້ຜູ່ຢູ່ລຸ່ມມີແຮງ ແມ່ນຫຍັງ?

— ບັກແພ້ແວ້ແປະໃສ່ຮູພັງ ຂອງຜູ້ຍິງມັກ ແມ່ນຫຍັງ?

— ສວດປູລູມີຮູຢູ່ກ້ອງ ບໍ່ແມ່ນເຊື້ອພີ່ນ້ອງ ບໍ່ໄດ້ລອງຮູ ແມ່ນຫຍັງ ?

ຄວາມທວາຍເຫລົ່ານີ້ ຈະບໍ່ຂໍແກ້ ຜູ່ໃດຮູ້ແລ້ວແລ້ວໄປ ໃຜບໍ່ຮູ້ກະຣຸນາຄອຍເບິ່ງສະບັບໜ້າຯຕໍ່ໄປ

ຈະຢ່າງໃດຕາມ ຄວາມທວາຍທັງຫລາຍກໍເກີດຂຶ້ນຈາກສິ່ງແວດລ້ອມ ອ້ອມຊີວິດປະຈຳວັນຂອງໄທບ້ານໄທເມືອງທົ່ວໆໄປມັ້ນເອງ ທີ່ທີ່ສັງເກດແລະສັນນິຖານ ເຫັນວ່າຄວາມທວາຍຊັ້ນເກົ່າ ມັກຈະມ່ວນແລະເລີກແລບດີກວ່າຄວາມທວາຍຊັ້ນລຸນຫລັງ

ຂ້າພະເຈົ້າໄດ້ຮິບໂຮມຄວາມທວາຍບູຮານ ໄວ້ໄດ້ປະມານ ໘໐໐ ປາຍຂໍ້ ທີ່ໃສ່ຊື່ວ່າ ຄວາມທວາຍບູຮານນີ້ເນື່ອງຈາກສັນນິຖານເຫັນວ່າ ເປັນຂອງເກົ່າຫລາຍກວ່າຂອງໃໝ່ ຂໍ້ໃດເປັນຂອງໃໝ່ກໍ່ພໍຈະຄິດເຫັນໄດ້

ອັນນຶ່ງ ເພື່ອໃຫ້ທ່ານຜູ້ອ່ານໄດ້ຮັບຄວາມມ່ອນໃຈຕາມສົມຄວນ ໄດ້ເອົາຄວາມແກ້ໄປໄວ້ອີກບ່ອນນຶ່ງຕ່າງຫາກ ເພື່ອໃຫ້ທ່ານຄິດແກ້ຄວາມທວາຍລອງສະຕິປັນຍາຂອງຕົນເສັຽກ່ອນ ຂໍໃຫ້ທ່ານຜູ້ອ່ານຄິດສົມມຸດເອົາວ່າ ຖ້າຜູ້ອ່ານເປັນຜູ້ສາວ ກໍ່ໃຫ້ໜັງສືຫົວນີ້ເປັນຜູ້ບ່າວ ຖ້າຜູ້ອ່ານເປັນຜູ້ບ່າວ ກໍ່ໃຫ້ໜັງສືຫົວນີ້ເປັນຜູ້ສາວທວາຍກໍ່ແລ້ວກັນ ເມື່ອຄິດທວາຍແລ້ວຈຶ່ງ ປິດໄປເບິ່ງຄວາມແກ້ຂອງມັນ ຖ້າທ່ານແກ້ຖືກຜິດ ຫລືຖືກຫລາຍ ກໍ່ຂໍໃຫ້ຊົມເຊີຍສະຕິປັນຍາຂອງຕົນເອງນັ້ນເຖີ້ນ.

ຂ້າພະເຈົ້າໄດ້ກ່າວແລ້ວວ່າ ຄຳທວາຍ ຫລືຄວາມທວາຍບູຮານນີ້ ເກີດຈາກຄົນທັມມະດາໆ ແລະເກີດຈາກເຫດການແລະສິ່ງແວດລ້ອມຂອງທ້ອງຖິ່ນນັ້ນໆນັ້ນເອງ ສັງເກດເບິ່ງແລ້ວກໍ່ແມ່ນເກີດຈາກເຄື່ອງໃຊ້ໄມ້ສອຍໃນບ້ານໃນເມືອງ ເປັນສ່ວນຫລາຍ ແຕ່ຖ້າຈະແຈກປະເພດຄວາມທວາຍອອກ ກໍ່ມີ ໘ ປະເພດໃຫຍ່ໆຄື:

ຄວາມທວາຍທັມມະດາ ມີທັງເລິກແລະຕື້ນ ນີ້ປະເພດນຶ່ງ

ອີກປະເພດນຶ່ງເປັນຄວາມທວາຍກ່ຽວກັບທັມມະ ປະເພດ

ນີ້ເຂົ້າໃຈວ່າ ອອກມາຈາກວັດຫລືຈາກພວກນັກປຣາດບັນດິດດັ່ງໃນຂໍ້ ໖໙ ແລະຂໍ້ ໘໔ ເປັນຕົ້ນ

ອີກຢ່າງນຶ່ງຄວາມທວາຍລາງຂໍ້ ກໍເຮັດໃຫ້ຜູ່ເດັ່ງໃນການອອກສຽງ ຕາມອັກຂຣະວິທີທົວຂອັນກໍໄດ້ ເພາະວ່າຄວາມທວາຍນັ້ນເອົາສຽງທີ່ໃກ້ໆກັນມາເປັນເຄື່ອງທວາຍຢ່າງໃນຂໍ້ວ່າ ເດັ່ງໆກ້ອງກາງດົງ ຄົນບໍ່ຕື່ນ ຄື່ນໆກ້ອງກາງບ້ານບໍ່ໄດ້ຍິນ (ຄວາມແກ້ຕອນທີ່ນຶ່ງແມ່ນກົກເດັ່ງ ຕອນສອງແມ່ນໝາກເຂືອຂື່ນ) ນັ້ນໝາຍຄວາມວ່າເອົາຄຳວ່າຄື່ນໆນັ້ນເປັນຄຳດຽວກັບຄຳວ່າ ໝາກເຂືອຂື່ນ ດັ່ງນີ້ເປັນຕົ້ນ ຄຳທວາຍແບບນີ້ມີຢູ່ບໍ່ໜ້ອຍ ຂໍໃຫ້ສັງເກດເບິ່ງໄປເລື້ອຍໆ

ວິທີຕັ້ງຄວາມທວາຍອີກແບບນຶ່ງຄື ການທວາຍປົນຄວາມຫລືກັບຄຳ ແຕ່ກໍມີຄຳອື່ນປະກອບຫລອກລໍ້ໃຫ້ເກີ ໂດຍເອົາອາການຫລືຮູບຮ່າງຂອງຄຳທີ່ຈະທວາຍນັ້ນອອກໜ້າຂໍໃຫ້ເບິ່ງຂໍ້ ໗໙, ໙໐, ໑໐໑ ເປັນຕົ້ນ ນັບວ່າຜູ່ຄິດຄວາມທວາຍທຳອິດນັ້ນ ເປັນຄົນຊ່າງຄິດ ຊ່າງຫາຄຳປຽບທຽບ ແລະເປັນຄົນຊ່າງຜູກຖ້ອຍຄຳໃຫ້ຄ່ອງຈອງກັນບໍ່ຂັດເຂີນ ອັນສະແດງເຖິງພູມພຍາຂອງຜູ່ຄິດຄວາມທວາຍນັ້ນນຳ

ປຽບວ່າບ່າວສາວ ໄດ້ຫລິ້ນທວາຍກັນມາກໍເຣື່ອງຂອງມານາຈິຕຕັງ ຢ່າງເພີ່ມວ່ານັ້ນລະ ຂອງແຊບຢູ່ນຳຜູ່ມັກ ຊູໃຜແມ່ນຕາ ຫລາໃຜແມ່ນມື ຄົນທີ່ຫລິ້ນທວາຍກັນໃຫ້ມ່ວນ ກໍຕ້ອງແມ່ນຄົນມັກມ່ວນແນວດຽວກັນ ອັນຄວາມທວາຍນີ້ ລາງຄົນກໍຕິວ່າບໍ່ມີປະໂຍດສັງ

ເອົາວິຊາການໃໝ່ໆມາທວາຍມາແກ້ກັນຈະບໍ່ດີກວ່າບໍ? ນີ້ແມ່ນຄວາມຄິດຂອງຄົນຜູ້ບໍ່ມັກຄວາມທວາຍ ເວົ້ານຳຜູ້ມັກ ເຫັນໜ້າຜູ້ຮິບໂຮມຊ້ຳພັດຖາມວ່າ ມີຄວາມທວາຍບູຮານບໍ່ລະ? ສະແດງວ່າຄວາມທວາຍບູຮານນີ້ມີຫລາຍຄົນບໍ່ມັກ ແລະກໍ່ມີຫລາຍຄົນມັກ ຖ້າຄວາມທວາຍບູຮານນີ້ບໍ່ມີໃຜມັກເລີຍ ກໍ່ຄົງບໍ່ມີຄົນຈື່ຈຳສືບຕໍ່ກັນມາຈົນເຖິງມື້ຂ້າພະເຈົ້າໄດ້ຮິບໂຮມ ເຊິ່ງຄວາມຈິງຄວາມທວາຍເຫລົ່ານີ້ ຫລາຍສິບຂໍ້ ຂ້າພະເຈົ້າຄິດວ່າມັນມີອາຍຸເປັນເວລາຕັ້ງຮ້ອຍປີ ສອງຮ້ອຍ ຫລືສາມຮ້ອຍປີກໍ່ອາດມີ ຄວາມທວາຍນີ້ບໍ່ເປັນສົມບັດຂອງຜູ້ໃດຜູ້ນຶ່ງໂດຍສະເພາະຄົນຜູ້ນຶ່ງຈະໄດ້ຄວາມທວາຍບໍ່ຮອດຊາວຂໍ້ ທີ່ຮູ້ວ່າດັ່ງນັ້ນ ຂ້າພະເຈົ້າເຄີຍໃຫ້ນັກຮຽນຊັ້ນມັທຍົມຂອງຂ້າພະເຈົ້າຂຽນໃຫ້ ຜູ້ຂຽນໃຫ້ມີປະມານ ໔໐ ຄົນຫາຜູ້ຈະໄດ້ເຖິງສິບຂໍ້ນັ້ນ ບໍ່ເຖິງສາມຄົນ ສ່ວນຫລາຍໄດ້ຄົນລະ ໓–໔ ຂໍ້ ຢ່າງດີກໍ່ມີ ໕–໖ ຂໍ້ ແລະສ່ວນຫລາຍມັກຊ້ຳກັນຂ້າພະເຈົ້າຕ້ອງມາຕັດຂໍ້ຊ້ຳກັນອອກ ຄຳທວາຍລາງຂໍ້ກໍ່ແຕກຕ່າງກັນເລັກໆນ້ອຍໆ ນອກຈາກນັ້ນກໍ່ອາສັຍຖາມ ແລະຈົດເອົາຈາກພວກໝູ່ເພື່ອນ ຕລອດທ່ານຜູ້ສູງອາຍຸລາງທ່ານ ເຊິ່ງກໍ່ໄດ້ນຳຜູ້ລະຂໍ້ສອງຂໍ້ສາມຂໍ້ແລະຖ້າຫາກວ່າ ມີແຕ່ຄົນມັກຄວາມທວາຍນຳກັນໝົດທຸກຄົນ (ເຊິ່ງຈ້າງກໍ່ເປັນໄປບໍ່ໄດ້) ຂ້າພະເຈົ້າກໍ່ຄົງຈະພິມແຕ່ຄວາມທວາຍບູຮານແນວດຽວຂາຍກິນ ກໍ່ຈະສະບາຍໄປ ຂ້າພະເຈົ້າບໍ່ປະຕິເສດຂໍ້ທີ່ວ່າຄວາມທວາຍບູຮານບໍ່ມີປໂຍດ ແຕ່ຂ້າພະເຈົ້າກໍ່ຍອມຮັບວ່າ ຄວາມ

ທວາຍບູຮານມີປໂຍດບໍ່ຫລາຍກໍພ້ອຍ ຍ່າງພ້ອຍກໍເປັນກົກແອບສອນໃຫ້ເດັກນ້ອຍຮູ້ຈັກຄຶດຫາຄຳແກ້ ຄວາມຈິງຂອງເກົ່າບູຮານກໍຫາກມີຫລາຍອັນດີ ແລະມີຫລາຍອັນບໍ່ດີຍ່າງບູຮານວັດຖຸ ຄຳສອນຂອງພຣະພຸທເຈົ້າເຊິ່ງເກົ່າຕັ້ງ ໔໕໐໐ ປີປາຍ ຫີນດວງຈັນ ເຊິ່ງເປັນຂອງເກົ່າມີອາຍຸນັບສີ່ພັນລ້ານປີ ພໍ່ແມ່ແຮ່ງເກົ່າແຮງແກ່ ເຮົາແຮ່ງໂຄຣົບບູຊາພຣະສົງຜູ່ບວດເຫິງຈົນຮ້ອງວ່າເປັນພຣະເກົ່າພຣະແກ່ ຄົນແຮ່ງໃຫ້ຄວາມສຳຄັນ ແຕ່ລາງຄົນອາດເຫັນຂອງເກົ່າບູຮານບໍ່ດີກໍອາດເປັນໄດ້ເພາະຄຶດວ່າ ມັນບໍ່ທັນສມັຍຍ່າງພວກເປັນຍາຊົນ (ທ່ານຜູ່ນຶ່ງແປວ່າພວກເອົາປັນຍາ ຊົນພູ) ມັກເຫັນຂ້າຣາຊການຜູ່ເຖົ້າເປັນຍາພິດ ຢາກໃຫ້ອອກເສັຽໃຫ້ແລ້ວໆໄປ ເຂົາເຈົ້າຈະໄດ້ແທນຕຳແໜ່ງ (ຈຳເພາະຕຳແໜ່ງມີເງິນດີ) ບາດໃຫ້ໄປແທນຕຳແໜ່ງຄຣູເຖົ້າ ທີ່ສອນຢູ່ຕາມສາລາວັດ ທາງບ້ານນອກຂອກມາ ເພິ່ນພັດເບ້ປາກອີກ ພວກບໍ່ມັກຂອງເຖົ້າຂອງເກົ່ານີ້ ແມ່ນພວກປີ້ນຄຳບູຮານ ຍ່າງຄຳວ່າ "ສິບພໍ່ເຖົ້າ ບໍ່ທໍ່ລູກເຂີຍ"

ອັນຂອງເກົ່າບູຮານນັ້ນ ບໍ່ດີກໍຫາກມີ ຍ່າງຜ້າເກົ່າໆ ສໍ່ບິກເກົ່າໆໄສ້ພຶກພົດແລ້ວ ເຈັຽເກົ່າໆ ຈົນມີສີເຫລືອງ ເຮືອນເກົ່າໆ ເຊອເຊແລ້ວ ຣົດເກົ່າໆຕິດຍາກ ມີແຕ່ດັງແກັກໆ ຈັກຈານຈັກໄອ ດັ່ງນີ້ເປັນຕົ້ນ ແຕ່ຍ່າງໃດກໍດີ ຄວາມທວາຍບູຮານນີ້ ຈະດີ ບໍ່ດີ ກໍຂໍໃຫ້ຢູ່ໃນຄວາມຄຶດຂອງທ່ານເອງ ສ່ວນຂ້າພະເຈົ້ານັ້ນ ມີເຈຕນາ ແຕ່ຈະຮັກ

ສາຣອຍຕີນຣອຍມືຂອງຄົນບູຮານໄວ້ ເພາະຕໍ່ໄປພາຍໜ້າ ອາດຈະມີ ແຕ່ຜູ້ແລ່ນນຳສມັຍໃໝ່ຈົນລືມເລືອກຂອງດີໆ ລາງເທື່ອ ລູກຫລານເຮົາ ບໍ່ຄ່ອຍເລືອກເອົາຂອງດີ ບາດຈະເລືອກ ກັບເລືອກເບັ້ນລູກສິດຂອງ ນອກຣີບປ໌ ລູກແສ້ ຫລານສາວ ກໍເຖິງສມັຍບໍ່ຽມຫົວ ບໍ່ຽມກົ້ນ ບໍ່ຽມຕາ ບໍ່ຽມຫົວນັ້ນ ແມ່ນບໍ່ຽມຊົງຜົມ ກ້ແລ້ວມາຍ ມາຍແລ້ວມ້ວນ ຣູບນີ້ ຊົງມັ້ນ ບໍ່ຽມກົ້ນນັ້ນ ບໍດນຶ່ງນຸ່ງສິ້ນ ບໍດນຶ່ງນຸ່ງສະເກີດ ພ້ອຍ ນຶ່ງນຸ່ງກະໂປງ ພ້ອຍນຶ່ງນຸ່ງສົ້ງ ລາງເທື່ອລ່າມຈົນເຖິງຕຸ້ມມ້ອງ ລາງຄາວ ກໍສັ້ນກໍກີ້ນເອົາແທ້ເອົາວ່າຈົນກົ້ນບໍ່ໄດ້ ບໍ່ຽມຕານັ້ນ ເຂົາມີແອ່ນນ້ອຍ ຂາຍ ກໍ່ຊີ້ໃສ່ ມີແອ່ນໃຫຍ່ຂາຍ ໃຫ້ມັນມົນ ມັນມີສີ່ຫລ່ຽມທີ່ຝ່າມື ກໍຕ້ອງຊີ້ໃສ່ ຖ້າເຂົາເຣັດໃຫຍ່ທີ່ຕາຣົດຍົນກໍເຫັນຈະຕ້ອງຊີ້ໃສ່ ເພາະຖ້າ ບໍ່ຊີ້ໃສ່ມັນກໍຈະຫລ້າສມັຍ ບໍ່ທັນສມັຍນຳບ້ານນຳເມືອງເຂົາ ໂດຍຈຳ ເພາະກໍຄົງຈະແມ່ນຍ້ານຮ້ານຂາຍແອ່ນຕາ ບໍ່ຮັ້ງທັນສມັຍເຂົານັ້ນເອງ ເຫດນັ້ນອົດສາໃຫ້ຜູ້ບໍ່ມັກ ຟັ້ງໄປກ່ອນ

ເວົ້າເຖິງຄຳເວົ້າຂອງຄົນບູຮານແລ້ວ ເພິ່ນມັກເວົ້າຄຳລາວ ຂອງເພິ່ນເອງ ບໍ່ຄ່ອຍຂີ້ດຽດຄຳລາວຕົນເອງ ນອກຈາກຄຳຈຳເບັ້ນ ແທ້ໆ ຢ່າງກິນເຂົ້າ ຊູນເຂົ້າກໍບໍ່ແລ່ນນຳກົ້ນເຂົາວ່າ ຮັບປະທານອາ ຫານ ຖືເປັນຄຳມີກຽດມີຍົດ ທັງໆທີ່ລາງຄົນຣອດບໍ່ຮູ້ຊ້ຳວ່າ ຄຳວ່າ ກິນ ເບັ້ນຫຍັງຈິ່ງໃຊ້ຄຳວ່າຮັບປະທານ ຕໍ່ໄປ ລາວເຮົາຄົງຈະຂີ້ດຽດຄຳ ວ່າ ໝາ ໝູ ງົວ ຄວາຍ ຯລຯ ໄປໃຊ້ຄຳວ່າ ສຸນັກ ສຸກອນ ໂຄ ກະບື ແທນກະວ່າບໍ່ຊ່າງ

ເຄີຍມີຜູ້ມາຊື່ມຖາມວ່າ ຄວາມທວາຍຂໍ້ນຶ່ງຖາມວ່າ ຫລືແຫລຫລີແຫລ້ຫລີແລຫລີຫລ່ ຕົ້ນຕ່ຳເຕ້ຽ ໃບຊ້ອນບໍ່ມີ ແລະຄວາມແກ້ວ່າ "ກົກດອກພາໄພ້" ມັ້ນກົກພາໄພ້ເບັ່ນກົກນ້ອຍກົກໃຫຍ່ສ່ຳໃດ? ຂໍບອກໃຫ້ວ່າ ກົກພາໄພ້ມັ້ນກົກນ້ອຍໆ ເສັ້ນນ້ອຍໆສູງບໍ່ເຖິງຄືບ ມີດອກສີເຫລືອງ ໃຫຍ່ປະມານທໍ່ເລັບມືນິ້ວກ້ອຍ ບໍ່ມີໃບ ຖ້າບໍ່ເບັ່ນດອກ ກໍມັກຫາບໍ່ເຫັນ ມັນມັກເກີດຢູ່ນຳຄັນນາເຮື້ອໃນຍາມນາ ຫລືຍາມຝົນນີ້ລະ

ໃນພັບຫົວນີ້ ໄດ້ເອົາບັ້ນຫາທັມມະບູຮານລາງຂໍ້ມາຕອບໄວ້ນຳ ເພາະເຄີຍຖືກຫລາຍຄົນຖາມ ຍ່າງບັ້ນຫາສຽວສວາດລາງຂໍ້ ອັນບັ້ນຫາທັມມະຂອງຄົນບູຮານນັ້ນ ລາງບັ້ນຫາ ກໍຕີຄວາມໝາຍໄປໄດ້ຫລາຍຍ່າງ ດັ່ງນັ້ນ ຖ້າທ່ານຜູ້ອ່ານໄດ້ຍິນໄດ້ຟັ່ງຄຳຕອບຈາກທ່ານຜູ້ອື່ນ ຜິດແຜກແຕກຕ່າງຈາກຄຳຕອບຂອງຂ້າພະເຈົ້າແລ້ວ ກະຣຸນາດີໃຈເທາະວ່າ ທ່ານມີໂຊກ ໄດ້ຟັ່ງຄຳຕອບຫລາຍອາຈານ ເພາະມັ້ນຈະເຮັດໃຫ້ບັ້ນຍາຂອງທ່ານແຕກງ່າແຕກແໜງໄປໄດ້ຫລາຍທາງກໍແລ້ວກັນ

ດັ່ງນັ້ນ ຈຶ່ງຂໍເຊີນທ່ານ ຫາຄວາມມ່ວນຊື່ນ ແລະປໂຍດອັນເລັກນ້ອຍ ຈາກຄວາມທວາຍບູຮານ ໄດ້ໃນບັດນີ້

ດ້ວຍຄວາມນັບຖື

*ຈັນທ໌ ອິນທຸພິລາສ*

ວຽງຈັນ ຕຸລາ 2516/໑໙໗໓

໑. ກິນແຕ່ໄສ້ເອົາໜັງໄວ້ເຮັດແນວ ແມ່ນຫຍັງ ?

໒. ກິນທາງກົ້ນຂີ້ອອກທາງປາກ ແມ່ນຫຍັງ ?

໓. ກິນຟາກນີ້ໜີໄປຂີ້ຟາກນັ້ນ ແມ່ນຫຍັງ ?

໔. ແກງກະດູກຫລ້ອນ ໄດ້ກິນຊີ້ນຊູ່ດຳ ແມ່ນຫຍັງ ?

໕. ກົກທໍ່ເຂັມ ໃບເຕັມມ້າ ແມ່ນຫຍັງ ?

໖. ກົກມັນໃດ່ (ແຫ້ງ) ຫລັງມັນອຶນ ແມ່ນຫຍັງ ?

໗. ກົກດຽວສາມຊີ່ ແມ່ນຫຍັງ ?

໘. ກົກຫຍັງບໍ່ມີຮາກ ບໍ່ມີໝາກ ບໍ່ມີໃບ ?

໙. ກົກທໍ່ເຮືອ ໃບທໍ່ເກືອບໍ່ໄດ້ ແມ່ນຫຍັງ ?

#47 ໑໐. ກົກທໍ່ລຳຫຽນ ໃບທໍ່ກະບຽນສວ່າຍເຂົ້າ ແມ່ນຫຍັງ ?

໑໑. ກົກມັນທໍ່ຄົກ ໝາກມັນດົກຈີ່ກິນກໍໄດ້ ແມ່ນຫຍັງ ?

#40 ໑໒. ກົກອີ່ຫຍັງເຫລືອຕາຍແຕ່ກ່າງ ຕົ້ນຈ່າງຮ່າງຫາໃບບໍ່ມີ ?

໑໓. ກົກກໍເກີດກ່ອນຕົ້ນ ຕົ້ນກໍເກີດລຸນຫລັງ ກົກກໍມ່ຣະມັງ
ຕາຍ ໝາກກໍເຊີຍແຊມຕົ້ນ ແມ່ນຫຍັງ ?

໑໔. ກົກຫຍັງບໍ່ມີຮາກ ມີໝາກ ບໍ່ມີໃບ ມີແຕ່ເຄືອຍາວ ໆ
ຕໍ່ກັນໄປເລື້ອຍ ?

໑໕. ໄກ່ຜູ້ແດງ ນອນສະແດງຢູ່ເທິງປາຍໄມ້ ແມ່ນຫຍັງ ?

໑໖. ໄກ່ແມ່ຂາວ ນອນຕາຍແຄມຮົ້ວ ແມ່ນຫຍັງ ?

໑໗. ໄກ່ແມ່ລາຍຕາຍຢູ່ປາຍຊານ ຄົນໝົດບ້ານບາດເອົາບໍ່ໝົດ
ແມ່ນຫຍັງ ?

໑໘. ໄກ່ແມ່ຂາວຈັບຮາວລາບຊາບ ແມ່ນຫຍັງ ?

໑໙. ໄກ່ແມ່ລາຍ ຕາຍຢູ່ແຄມຮ່ອມ ເຊືອກມັດລ້ອມເດາະດ່ອງ ເມືອບົນ ແມ່ນຫຍັງ ?

໒໐. ໄກ່ແມ່ດຳ ຕົກນ້າບໍ່ປຽກ ແມ່ນຫຍັງ ?

໒໑. ໄກ່ແມ່ກ້າ ກິນຫຍ້າອ້ອມໂພນ ແມ່ນຫຍັງ ?

໒໒. ໄກ່ຜູ້ແດງນອນສະແດງຢູ່ນຳແຈຮັ້ອ ແມ່ນຫຍັງ ?

໒໓. ໄກ່ແມ່ໝົ່ນ ຊັ້ນຂຶ້ນຫລັງຄາ ແມ່ນຫຍັງ ?

໒໔. ກົ່ງດັ້ງນັ້ງ ຂົນເກີດລາມກົກ ແມ່ນຫຍັງ ?

໒໕. ກໍໄຜ່ໝົດກໍ ຫາຂ້ ບໍ່ພ້ ແມ່ນຫຍັງ ?

໒໖. ກອ້າງສອງວາສາມວາ ຍາວທໍ່ເຄືອເຂົາ ແມ່ນຫຍັງ ?

໒໗. ກ່ອງເຂົ້ານ້ອຍ ຫ້ອຍຢູ່ແຈຝາ ຫລຽວໄປຫລຽວມາ ຫລຽວຫາບໍ່ເຫັນຈອຍ ແມ່ນຫຍັງ ?

໒໘. ກອງອີ່ຫຍັງ ດັງແຮງກອ່າໝູ່ ຢູ່ບໍ່ຢູ່ດັງຮອດລອນດອນ ?

໒໙. ຂີ້ທ່ໄສ້ ໃບໄມ້ທ່ຂີ້ ແມ່ນຫຍັງ ?

໓໐. ຂຸດໄດ້ ເອົາຖິ້ມ ຖ້າຂຸດບໍ່ໄດ້ເອົາໄປນຳ ແມ່ນຫຍັງ ?

໓໑. ດົດໂດ້ງກາງເຫລົ່າ ເຕົ້າເນົ້າກາງເຮືອນ ເດບເດັ້ງກາງ ຊານ ແມ່ນຫຍັງ ?

໓໒. ຂົນແຍ່ມແຍະ ແປະກັນແຊບແຊບ ແມ່ນຫຍັງ ?

໓໓. ຂຽວຄືພຣະອິນ ບິນມາຄືນົກ ນິສອນສຽບເອິກ ຊິອ່າ ນົກກະບໍ່ແມ່ນ ແມ່ນຫຍັງ ?

໓໔. ເຂົ້າໜ້ອຍ–ແຈບ ເຂົ້າຫລາຍ–ບໍ່ແຈບ ແມ່ນຫຍັງ ?

໓໕. ຄັນຫຍັງບໍ່ເກົາ ?

໓໖. ຄຸນ້ຳນ້ອຍຫ້ອຍຢູ່ປາຍຫລັກ ຕັກກະເຕັນ ບໍ່ຕັກກະເຕັນ ແມ່ນຫຍັງ ?

໓໗. ເຄັງ ໆ ກ້ອງ ກາງດົງມຶດຈີ່ລີ່ ແມ່ນຫຍັງ ?

໓໘. ເຄັງ ໆ ກ້ອງ ກາງດົງຄົນບໍ່ຕື່ມ ຄື່ມ ໆ ກ້ອງ ກາງບ້ານບໍ່ໄດ້ຍິນ ແມ່ນ ຍັງ ?

໓໙. ເຄັນບໍ່ຈິດ ມຶດບໍ່ແຈ້ງ ທາບບໍ່ພັກ ຕັກບໍ່ເຕັມ ແມ່ນຫຍັງ ?

໔໐. ແຄ່ງບໍ່ຂາ ໄຕ່ຄັນມາໄປດ້ອມ ໆ ແມ່ນຫຍັງ ?

໔໑. ຄົນຫລີສັດ ຮ້ອງຂໍ້ບໍ່ຄື່ຊິໂຕ ແມ່ນຫຍັງ ?

໔໒. ຄົນສາມແສນ ຫາມແກ່ນໄມ້ດູ່ ແມ່ນຫຍັງ ?

໔໓. ໂຄກກວ້າງຕໍ່ກວ້າງ ບໍ່ມີໄມ້ຂວ້າງໝໍລຳ ແມ່ນຫຍັງ ?

໔໔. ງະຂາຂົ້ນ ເອົາອັນແດງ ໆ ສຸບໃສ່ ແມ່ນຫຍັງ ?

໔໕. ງູສິງບໍ້ອງ ງູທອງຄາບດອກ ດອກຄາບໄສ້ ໃບໄມ້ທໍ່ໂຕ ແມ່ນຫຍັງ ?

໔໖. ຈັບໄດ້ ເບິ່ງບໍ່ເຫັນ ແມ່ນຫຍັງ ?

໔໗. ຈັບທາງ ຂໍ້ຈວາກ ແມ່ນຫຍັງ ?

໔໘. ຈີ່ຫົວ ກິນຫາງ ແມ່ນຫຍັງ ?

໔໙. ສັກຟາກນີ້ ໄປຊີ້ຟາກນັ້ນ ແມ່ນຫຍັງ ?

໕໐. ສັບພັງ ດັງວາ ຕາຕິດໂຕ ແມ່ນຫຍັງ ?

໕໑. ສາກກ້ອມແກ້ມ ຕຳເຂົ້າແລງງາຍ ແມ່ນຫຍັງ ?

໕໒. ສາມຂາ ຕາດຽວ ກິນດົນໝົດເມືອງ ແມ່ນຫຍັງ ?

໕໓. ສີ່ແຈ ສາມຈອກ ອອກດອກເດິ່ງກາງ ແມ່ນຫຍັງ ?

໕໔. ສາມອ້າຍນ້ອງ ຮ່ອມສາຍແອວດຽວ ແມ່ນຫຍັງ ?

໕໕. ສາມຕີນຕັ້ງ ພຍາໝີຂຶ້ນຂີ່ ປີ່ນ້ອຍເສບນຳ ຫລາວຄ່ຳ ແທງກົ້ນ ແມ່ນຫຍັງ ?

໕໖. ສອງຈອກຈ້ອງ ປີ່ນຮູລົງລຸ່ມ ແມ່ນຫຍັງ ?

໕໗. ສອງຂາຊີ້ຂຶ້ນຟ້າ ຫາກິນຫຍ້າອ້ອມໂພນ ແມ່ນຫຍັງ ?

໕໘. ສອງຂາເບັ້ນ ເຕັ້ນຂຶ້ນຂີ່ສີ່ຂາຕາຍ ສີ່ຂາຕາຍ ບ້າຍຂຶ້ນ ຂີ່ສີ່ຂາເບັ້ນ ແມ່ນຫຍັງ ?

໕໙. ລິງສອງໂຕ ຊິງກັນໄປກ່ອນ ແມ່ນຫຍັງ ?

໖໐. ສອງຜູ້ເຖົ້າຢູ່ລຽບເລົ້າ ບໍ່ເຫັນກັນຈັກເທື່ອ ແມ່ນຫຍັງ ?

໖໑. ສອງມິເມັ້ນ ທາງແອວໄອ່ ໆ ຍ້ານແຕ່ມັນບໍ່ເຂົ້າ ເອົາ ມ້າໃສ່ນຳ ແມ່ນຫຍັງ ?

໖໒. ສອງມື້ຍ້າຍເຮືອນ ສາມເດືອນຍ້າຍບ້ານ ແມ່ນຄົນຈຳພວກໃດ ?

໖໓. ສອງຫາງຊີ້ ສີ່ຫູຊັນ ແປດຕີນຍັ່ນໝັ້ນປານໄໝຜູກ ແມ່ນຫຍັງ ?

໕໔. ສີ່ຂາຄ້າຟ້ຳ ສາມໜ້າຫົກຫູ ສາມຮູຂີ້ ທາງດຽວຊີ້ແກ່ແດ່ ແມ່ນຫຍັງ ?

໕໕. ສີ່ຄົນຫາມແຂັ້ນ ຄົນນຶ່ງສຽກແຂັນໄປກ່ອນປູລູ ໆ ແມ່ນຫຍັງ ?

໕໖. ສີ່ຕີນຊີ້ຟ້າ ສີ່ຂາຢຽບດິນ ຫົກຫູ ຫົກຕາ ທາງດຽວ ແມ່ນຫຍັງ ?

໕໗. ສີ່ຕີນຕັ້ງທໍຣະນີຍ່ອງເຢາະ ອ້າປາກຂຶ້ນເທິງຟ້າຄາຍງາ ແມ່ນຫຍັງ ?

໕໘. ສີ່ຫູຊີ້ຟ້າ ອ້າປາກກິນຄົນ (ແຕ່ຍາມກາງຄືນ) ແມ່ນຫຍັງ?

໕໙. ສີ່ຫູໜັນຕາ ສີ່ຂາຫາກິນທາງນ້າ ແມ່ນຫຍັງ ?

໖໐. ສຸກເຕັມດິນ ເກັບກິນບໍ່ໄດ້ ແມ່ນຫຍັງ ?

໖໑. ສຸກໂຂ ສຸກຂື ສຸກໄຂ ແມ່ນຫຍັງ ?

໖໒. ສູງກວ່າມ້າ ຕ່ຳກວ່າແຄມເຮືອ ແມ່ນຫຍັງ ?

໖໓. ສອດປູລູມີຮູຢູ່ກ້ອງ ບໍ່ແມ່ນເຊື້ອພີ່ນ້ອງບໍ່ໄດ້ລອງຮູ ແມ່ນຫຍັງ ?

໖໔. ສາວສີສາວສົນ ຍືນຊຸມຕາກແດດ ອຸ້ມລູກນ້ອຍຢືນໄຫ້ ແຂ່ງຝົນ ແມ່ນຫຍັງ ?

໖໕. ສັດແນວນຶ່ງ ຍາມເຊົ້າມັນຍ່າງສີ່ຂາ ຍາມແລງມາມັນຍ່າງສອງແຄ່ງ ຄ່ຳແມ້ງ ໆ ມັນຍ່າງສອງຕີນ ແມ່ນຫຍັງ?

໗໖. ສ້ອຍ ໆ ຄືໃບໝູ ມີຮູຢູ່ເຄິ່ງ ຂົນຂຶ້ນອ້ອມຮີມ ແມ່ນຫຍັງ?

໗໗. ຈ້າງຂຶ້ນໝູ ຕົບຫູເປ໊ະ ໆ ແມ່ນຫຍັງ ?

໗໘. ຈ້າງສາມຫົວ ພຍາອິນຂຶ້ນຂີ່ ປີ່ນ້ອຍເສບນຳ ໄພດຳ
ຮອງກົ້ນ ແມ່ນຫຍັງ ?

໗໙. ຈ້າງຢູ່ບ່າ ງາເຜົາ ແມ່ນຫຍັງ ?

໘໐. ຈ້າງຂຶ້ນໝູ ຫັກໄວ້ ໆ ແມ່ນຫຍັງ ?

໘໑. ຈີ່ໂຕມັນຢູ່ບ່າ ຫາງໄປຢູ່ນ້າ ເຊີນເອົາວ່າແມ່ນຫຍັງ ?

໘໒. ຈີ່ມັນຢູ່ບ່າ ໂຕມາຢູ່ບ້ານ ກິນອາຫານຢ່າງດຽວ ຄ້ຽວ
ແລ້ວຕາຍ ແມ່ນຫຍັງ ?

໘໓. ຊູກ ໆ ນ້ຳອອກ ຍອກ ໆ ນ້ຳມາ ຍໍສອງຂາຕາເຫລືອກ
ມ້ານ ໆ ແມ່ນຫຍັງ ?

໘໔. ຈົກງົກຄືຄໍມ້າ ໄປຄ້າບໍ່ເຫັນຮອຍ ແມ່ນຫຍັງ ?

໘໕. ເຊືອກເສັ້ນດຽວ ຈູງຄວາຍພົດໝູ່ ແມ່ນຫຍັງ ?

໘໖. ຍັງມີອາຈະໄນມ້າ ສີລານປານຟ້າວແກ່ ມັນຫາກິນແຕ່
ຈົ້ມ ແນວນ້ຳແມ່ນບໍ່ຄອຍ ແມ່ນຫຍັງ ?

໘໗. ຍາມຝົນຂຶ້ນຮາກ ຍາມແລ້ງຂຶ້ນໃບ ແມ່ນຫຍັງ ?

໘໘. ຍາວໂຕ້ນເຕ້ນ ຫ້ອຍຢູ່ຫວ່າງຂາ ຂອງຜູ້ຍິງມັກ ແມ່ນ
ຫຍັງ ?

໘໙. ຢາກໃຫ້ໃຫຍ່ຖາກເຂົ້າ ຢາກໃຫ້ນ້ອຍປະມ້ຽນ ແມ່ນ
ຫຍັງ ?

໙໐. ຢູ່ໃກ້ ໆ ເຫັນພໍດິມມິມ ແມ່ນຫຍັງ ?

໙໑. ຢຽບຫາງສັບປີກ ແມ່ນຫຍັງ ?

໙໒. ເດັກນ້ອຍ ໆ ເອົາຂີ້ຝອຍຮອງນັ່ງ ແມ່ນຫຍັງ ?

໙໓. ດອກອັນນຶ່ງ ບານໃນຖ້ຳ ຝົນຕົກຮຳປີລະເທື່ອ ແມ່ນ
ຫຍັງ ?

໙໔. ດຳດີໝີ ພິດີເໝັ້ນ ຂົນບໍ່ມີ ປາກເອີ້ດີດັ່ງດັງໝູ ແມ່ນ
ຫຍັງ ?

໙໕. ດຳດັ່ງກາ ບິນມາດັ່ງນົກ ມີໄມ້ດັກອົກ ແມ່ນຫຍັງ ?

໙໖. ດຳດັ່ງໝີ ຕີໄດ້ບໍ່ຕາຍ ແມ່ນຫຍັງ ?

໙໗. ດຳດັ່ງໝີ ແຮ່ງຕີແຮ່ງກັດ ແມ່ນຫຍັງ ?

໙໘. ແຕ່ຍັງນ້ອຍມັນນຸ່ງເສື້ອດັບ ຫຍັບໃຫຍ່ມາມັນນຸ່ງເສື້ອ
ຫລົມ ລົມມາຕ້ອງສຽງດັງຕິ່ງເລັ່ງ ໆ ແມ່ນຫຍັງ ?

໙໙. ແຕ່ຍັງນ້ອຍມັນນຸ່ງເສື້ອຂຽວ ໃຫຍ່ມາມັນນຸ່ງເສື້ອແດງ
ແມ່ນຫຍັງ ?

໑໐໐. ແຕ່ນ້ອຍເທົ້າໃຫຍ່ມີສາມຊື່ ແມ່ນຫຍັງ ?

໑໐໑. ຕົກປີກຂ້າງຊີ້ ແມ່ນຫຍັງ ?

໑໐໒. ຕົກປີກຂ້າງຊີ້ ບໍ່ໃຫ້ອ່າຂີ້ຊ້າງ ແມ່ນຫຍັງ ?

໑໐໓. ຕົ້ນທໍ່ຄົກ ໃບປົກດິນ ແມ່ນຫຍັງ ?

໑໐໔. ໂຕທໍ່ເລົ້າ ກ້ອນຂີ້ທໍ່ແຂນ ໂຕທໍ່ແຕນ ຂີ້ມັນທໍ່ເລົ້າ
ໂຕເຄົ້າມູ້ເຄົ້າເມົ້າ ຂີ້ທໍ່ໝາກກອກໝາກເດືອຍ ແມ່ນຫຍັງ?

໑໐໕. ໂຕມັນຢູ່ນາ ຕາມັນຢູ່ບ້ານ ແມ່ນຫຍັງ ?

໑໐໖. ເຕີເລີທ່ຜືນຟາກ ຄົນທັງເມືອງລາກໄປບໍ່ໄດ້ ແມ່ນຫຍັງ?

໑໐໗. ຕ່ຳກວ່າຫຍ້າ ຍາວກວ່າເຄືອເຂົາ ແມ່ນຫຍັງ ?

໑໐໘. ຕ່ຳຕຸ໊ກປຸ໊ກ ເລີກແປດສອກ ແມ່ນຫຍັງ ?

໑໐໙. ຕ່ຳເຕ໊າະເປ໊າະ ໄດ້ເອົາໄມ້ແໝ້ນກິນ ແມ່ນຫຍັງ ?

໑໑໐. ຖີ່ກັດຈັດ ຂີ້ຊ້າງພັດລອດ ຫ່າງກ່າງຈ່າງ ຂີ້ມອດພັດ ຄາ ແມ່ນຫຍັງ ?

໑໑໑. ຖິ້ມໄປແລ້ວເອົາຄືນ ແມ່ນຫຍັງ ?

໑໑໒. ຖືກກ່ງົມ ບໍ່ຖືກກ່ງົມ ແມ່ນຫຍັງ ?

໑໑໓. ເຖົ້າໄປມາ ເຖົ້າບ່ອຍ ແມ່ນຫຍັງ ?

໑໑໔. ທາງໃຕ້ກໍຖາມຮຽງ ທາງເທິງກໍຖາມຮຽງ ສລິກຂຶ້ນຕຽງ ລຶ້ນພັດແທ ໆ ແມ່ນຫຍັງ ?

໑໑໕. ທາງໃຕ້ກໍຜາ ທາງເທິງກໍຜາ ແມງດາເຂົ້າຖ້ຳ ແມ່ນ ຫຍັງ ?

໑໑໖. ທາງນີ້ກໍຝາ ທາງນັ້ນກໍຝາ ຫາບ່ອນອີງບໍ່ໄດ້ ແມ່ນຫຍັງ ?

໑໑໗. ຫົວສາມຂາ ພຍາບົ້ງຂຶ້ນຂີ່ ຜູ່ນຶ່ງກົ້ມຈຸ່ມນ້າອ້າປາກ ກ່ຳຫວາ ແມ່ນຫຍັງ ?

໑໑໘. ຫົວລອດລາຍ ພາຍເຮືອລອດພຸ່ມ ແມ່ນຫຍັງ ?

໑໑໙. ທຸມທຸ່ຍກາງດົງ ກົ່ງຈົ່ງກາງເຫລົ່າ ສັກເຕົ່າກາງໜອງ ລ້ອງດ້ອງຫົວຄັນໄດ ແອະແອ່ມກາງຊານ ແມ່ນຫຍັງ ?

໑໒໐. ນອນຂວ້າ ຫົວເຂົ້າຖ້ວນໂຕ ແມ່ນຫຍັງ ?

໑໒໑. ນອນຫງາຍ ເອົາອົກຈຸ່ມນ້າ ແມ່ນຫຍັງ ?

໑໒໒. ນອນຕ່ຳຂີ້ສູງ ນອນສູງຂີ້ຣາດຫົວ ແມ່ນຫຍັງ ?

໑໒໓. ນົກຍາງຂາວ ຫາງຍາວຕ້ອຍກົ້ນ ແມ່ນຫຍັງ ?

໑໒໔. ນົກຫຍັງ ຣູ້ແຕ່ສັບກິນ ແຕ່ບິນບ່ໄດ້ ?

໑໒໕. ນ້າເຕົ້ານ້ອຍ ຫ້ອຍຢູ່ແຈຝາ ຫລຽວຫາບ່ເຫັນ ແມ່ນ ຫຍັງ ?

໑໒໖. ນ້າມີໝໍອາບ ແຕ່ບໍ່ໝໍກິນ ແມ່ນຫຍັງ ?

໑໒໗. ໜ້ານ້ອຍ ໆ ຍິງໄປໃສກໍຣອດ ແມ່ນຫຍັງ ?

໑໒໘. ໜາມລ້ອມໜາມ ຍ້ຳນໜາມກິນໜາມ ແມ່ນຫຍັງ ?

໑໒໙. ໜ່ອຍມົນ ໆ ກີ້ງມາແຕ່ທາງສູງ ຣອດລຸ່ມແລ້ວປີ້ນໂຕ ແມ່ນຫຍັງ ?

໑໓໐. ໜອງອັນນຶ່ງ ມີປາຢູ່ມາກ ມີໝຍາມາກມັກລົງໄປກອນ ມີສາວໜ້ານອນ ແຄມໜອງນັ່ງເຝົ້າ ແມ່ນຫຍັງ ?

໑໓໑. ໜອງອັນນຶ່ງທັງເລິກທັງໃສ ດຳລົງໄປຫານ້າບ່ໄດ້ ແມ່ນ ຫຍັງ ?

໑໓໒. ໜັງສືມາແຕ່ເມືອງນອກ ລາວອ່ານບ່ອອກ ວ່າແມ່ນ ໄທຂຽນ ແມ່ນຫຍັງ ?

໑໓໓. ບໍ່ມີຂາຂຶ້ນມູ ບໍ່ມີຫູເກືອກບອກ ແມ່ນຫຍັງ ?

໑໓໔. ບໍ່ມີຫູຂຶ້ນຝາ ບໍ່ມີຕາຂຶ້ນໄມ້ ບໍ່ມີໄສ້ຮູໄລ່ກິນດິນ ບໍ່ມີຂົນເກືອກບອກ ແມ່ນຫຍັງ ?

໑໓໕. ບໍ່ມີກົກ ບໍ່ມີຮາກ ບໍ່ມີໝາກ ບໍ່ມີໃບ ມີແຕ່ເຄືອໃສໆ ໄຫລໄປນຳນ້ຳ ແມ່ນຫຍັງ ?

໑໓໖. ບັກຫົວໂຫລ້ນ ໂຕນນ້ຳແຕ່ເດິກ ແມ່ນຫຍັງ ?

໑໓໗. ບັກນ້ອຍໆ ໄປດ້າບໍ່ເຫັນຮອຍ ບັກຊອຍວອຍໄປດ້າບໍ່ເຫັນທິບ ແມ່ນຫຍັງ ?

໑໓໘. ບັກດັ້ງນັ້ງ ຂ້າມທົ່ງສາມແສນ ໃຜທວາຍໄດ້ໃຫ້ແຫວນວົງນຶ່ງ ແມ່ນຫຍັງ ?

໑໓໙. ບັກນ້ອຍໆ ຕິດ້ອງເລາະໂພນ ແມ່ນຫຍັງ ?

໑໔໐. ບັກນ້ອຍໆ ແລ່ນຂຶ້ນກະດີ ຄຣູບາຈັບກິນຂີບໍ່ປາກ ແມ່ນຫຍັງ ?

໑໔໑. ບັກນ້ອຍໆ ຊູກໄປຊ້ຳແລ່ນຄືນ ແມ່ນຫຍັງ ?

໑໔໒. ບັກນ້ອຍໆ ເຮັດນາໄກພໍ່ ແມ່ນຫຍັງ ?

໑໔໓. ບັກນ້ອຍໆ ມັນແລ່ນລົງທ່າ ແມ່ມັນດ່າມັນແລ່ນຂຶ້ນເຮືອນ ແມ່ນຫຍັງ ?

໑໔໔. ບັກແພ້ແວ້ແປະໃສ່ຮູໜັງ ຂອງຜູ້ຍິງມັກ ແມ່ນຫຍັງ ?

໑໔໕. ບາດໄປທີ່ໄຮ່ນາ ບາດມາທີ່ກ້ອນເສົ້າ ແມ່ນຫຍັງ ?

໑໔໖. ແບກ່າງຈ່າງ ຂອງຕ່າງພາສາ ສີຂາແລ້ວບໍ່ມີຕີນພາຍ່າງ ແມ່ນຫຍັງ ?

໑໔໗. ບັກອຸ້ມລຸ້ມ ຕົກລຸມບໍ່ຍ້ານ ບັກຂີ້ດ້ານ ມັ່ງຖ້າຢູ່ເທິງ ແມ່ນຫຍັງ ?

໑໔໘. ໃບຍາວວາ ຕາຕິດໂຕ ແມ່ນຫຍັງ ?

໑໔໙. ໃບຍົ້ກ ໆ ລູກຮັກເຕັມດໍ ແມ່ນຫຍັງ ?

໑໕໐. ໃບມັນທ່ແປ້ນກີ່ ໝາກມັນຈີ່ກິນເບັ້ນ ແມ່ນຫຍັງ ?

໑໕໑. ໃບມັນໃຫຍ່ທ່ໝ້າຕັ້ງ ຮອງມັ້ງບໍ່ໄດ້ ແມ່ນຫຍັງ ?

໑໕໒. ປາຫຍັງໃຫຍ່ກວ່າໝູ່ໃນນ້າຂອງ ?

໑໕໓. ປູລູສ້ອຍ ສາມປີບໍ່ໄຂກາບ ເກີດແຕ່ພ້ອມພຣະເຈົ້າ ປານນີ້ບໍ່ບານ ແມ່ນຫຍັງ ?

໑໕໔. ໄປກໍຕ້ອຍ ມາກໍຕ້ອຍ ແມ່ນຫຍັງ ?

໑໕໕. ໄປກໍແປະ ມາກໍແປະ ແມ່ນຫຍັງ ?

໑໕໖. ໄປທ່ໄຮ່ນາ ມາທ່ກ້ອນເສົ້າ ແມ່ນຫຍັງ ?

໑໕໗. ໄປໄອ ມາຊ້າ ແມ່ນຫຍັງ ?

໑໕໘. ໄປຫາ ມາເປົ່າ ແມ່ນຫຍັງ ?

໑໕໙. ຜ້າຫ້າແຈ ດາຖາກັນຍັກ ແມ່ນຫຍັງ ?

໑໖໐. ຜີບ້າອອກກ່ອນ ຫູໝອກຢູ່ກາງ ຕາຟາງນຳກົ້ນ ແມ່ນຫຍັງ ?

໑໖໑. ຜູ່ຢູ່ຫ້ອຍສາມນອງ ຜູ່ຢູ່ໝອງກອງກົ້ນ ຜູ່ຢູ່ມາບົ້ນຖ້ອຍ ແມ່ນຫຍັງ ?

໑໖໒. ຜູ່ໄປກ່ອນຖາງທາງ ຜູ່ຢູ່ກາງງ້າງປີອະ ຜູ່ນຳກົ້ມບໍ່ໄອ້ກໍ່
ດາງ ແມ່ນຫຍັງ ?

໑໖໓. ຜູ່ເຫັນບໍ່ເອົາ ຜູ່ເອົາບໍ່ກິນ ຜູ່ກິນບໍ່ຂີ້ ຜູ່ຂີ້ບໍ່ເໝັນ
ແມ່ນຫຍັງ ?

໑໖໔. ຜູ່ເຮັດບໍ່ໄດ້ໃຊ້ ຜູ່ໃຊ້ບໍ່ຮູ້ ແມ່ນຫຍັງ ?

໑໖໕. ໃຜໄປກໍ່ເດົ້າ ໃຜມາກໍ່ເດົ້າ ເຂົ້າບໍ່ເຂົ້າຄ່ຳດູ ແມ່ນຫຍັງ?

໑໖໖. ພຣະບໍ່ມີຄົນໄຫວ້ ຈຳພັນສາຢູ່ກາງທົ່ງ ຍາມຝົນລົງ
ຫລິ້ນນ້ຳ ຍາມແລ້ງຂຶ້ນຢູ່ຖຽງ ແມ່ນຫຍັງ ?

໑໖໗. ພຣະຣັດສິນອນໃນຖ້ຳ ຝົນບໍ່ຮຳຈັກເທື່ອ ພອດປີ່ງຂຶ້ນ
ຫົວລ້ານປີ່ງບໍ່ທັນ ແມ່ນຫຍັງ ?

໑໖໘. ພຣະຣັດສີນອນໃນຖ້ຳ ຝົນບໍ່ຮຳຈັກເທື່ອ ບາດວ່າແດດ
ກ້າ ໆ ເດືອນຫ້າຈຶ່ງຄ່ອຍຮຳ ແມ່ນຫຍັງ ?

໑໖໙. ພຣະຣັດສີນັ່ງພາວະນາໃນຖ້ຳ ຫົວນ້ອຍທໍ່ໝາກທັນ
ແມ່ນຫຍັງ ?

໑໗໐. ພີ່ນ້ອງທ້ອງດຽວ ຫລຽວຫາກັນບໍ່ເຫັນ ແມ່ນຫຍັງ ?

໑໗໑. ພຸ້ນກະໂລ່ງ ພີ້ກະໂລ່ງ ຕອນເຂົ້າບ່າທາງໝ້າມີສົບ
ແມ່ນຫຍັງ ?

໑໗໒. ໄຟໄໝ້ບ່າ ບໍ່ໄໝ້ເຊືອກໜັງ ແມ່ນຫຍັງ ?

໑໗໓. ໄຟໄໝ້ບ່າ ບໍ່ໄໝ້ໝົກເຫັດ ແມ່ນຫຍັງ ?

໑໗໔. ມາຕົວນຶ່ງ ເຫັນພ້ອຍນຶ່ງ ມາສອງຕົວບໍ່ເຫັນຊ້າ ແມ່ນຫຍັງ ?

໑໗໕. ມ້າຕົວນຶ່ງ ແລ່ນມາແຕ່ປະເທດໝະມ້າ ເອົາຫລັງຄາບຫຍ້າ ຄາຍອອກເບັ້ນຝອຍ ແມ່ນຫຍັງ ?

໑໗໖. ມີແຕ່ຫົວ ບໍ່ມີປີກ ບິນໄປໄດ້ ແມ່ນຫຍັງ ?

໑໗໗. ມີໜອງບໍ່ມີນ້ຳ ມີແຕ່ບົວເດັຽຣະດາດ ນອກຝັ່ງມັນໜາມລ້ອມຖີ່ຖັນ ແມ່ນຫຍັງ ?

໑໗໘. ມີຫົວບໍ່ມີຜົມ ມີນົມບໍ່ມີຄູ່ຊ້ອນນອນລີ້ຢູ່ສງຽມ ແມ່ນຫຍັງ ?

໑໗໙. ແມ່ນ້ຳນຶ່ງ ຊື່ແມ່ນ້ຳເສຫາ ຝົນຕົກມາແລ້ວແຫ້ງ ຍາມແລ້ງແດດເຕັມໜ້ານ້ຳຖ້ວມຫົວ ແມ່ນຫຍັງ ?

໑໘໐. ແມ່ມັນຮ້ອງກົ໊ກ ໆ ລູກມັນຕົກຍວ່າ ໆ ແມ່ນຫຍັງ ?

໑໘໑. ແມ່ມັນຮ້ອງອື່ ໆ ລູກມັນພີ້ອມລົ້ມ ໆ ແມ່ນຫຍັງ ?

໑໘໒. ແມ່ມັນຮ້ອງໂອ໊ະ ໆ ລູກມັນຕົກໂພ່ເພ່ ແມ່ນຫຍັງ ?

໑໘໓. ແມ່ມັນຫອບລູກໄວ້ ຖ້າແມ່ປາກລູກຈະຈາກແມ່ໄປ ແມ່ນຫຍັງ ?

໑໘໔. ແມງຄັບເຄື່ອງ ບິນໄປຈັບກົກທ່ອນ ກົ້ນມັນຍ່ອນຫົວງ່ຳ ໆ ແມ່ນຫຍັງ ?

໑໘໕. ແມ່ນຫຍັງ ຢູ່ໃນນ້ຳມັນກັດຄົນ ຢູ່ບົນບົກຊ່ອຍຄົນທັງຄ້າຍ ?

໑໘໖. ແມ່ນຫຍັງລອຍຢູ່ກາງສມຸດ ?

໑໘໗. ໄມ້ແກ່ແດ່ ສັກຢູ່ກາງໜອງ ໃຜມາກໍຕ້ອງ ແມ່ນຫຍັງ ?

໑໘໘. ໄມ້ຄັນຫລາວ ຊັດເຂົ້າບ່າອ້ອຍ ຄົນຕັ້ງຮ້ອຍຊອກຫາ ບໍ່ເຫັນ ແມ່ນຫຍັງ ?

໑໘໙. ໄມ້ທ່ອນນຶ່ງ ຢູ່ປະເທດລານນາ ເອົາຂາຊີ້ຂຶ້ນຟ້າ ເອົາ ສົບໜົ້ມໃສ່ດິນ ແມ່ນຫຍັງ ?

໑໙໐. ໄມ້ນ້ອຍ ໆ ຖົ້ມຢູ່ກາງທາງ ຊ້າງຢຽບບໍ່ຫັກ ແມ່ນຫຍັງ?

໑໙໑. ໄມ້ນ້ອຍ ໆ ຖົ້ມຢູ່ກາງໜອງ ຄົນທັງເມືອງປອງເອົາບໍ່ ໄດ້ ແມ່ນຫຍັງ ?

໑໙໒. ໝາກພ້າວຫ້າວ ໄຫລລ່ອງກາງວັງ ຄົນທັງດິນເກັບກິນ ບໍ່ໄດ້ ແມ່ນຫຍັງ ?

໑໙໓. ໝູແມ່ມານ ຄານລົງນອນມ້າ ແມ່ນຫຍັງ ໃ

໑໙໔. ໝໍ້ດຳງຳດິນ ແມ່ນຫຍັງ ?

໑໙໕. ລູກມັນຕີ ແມ່ມັນຮ້ອງ ແມ່ນຫຍັງ ?

໑໙໖. ແລບແຊບສົ່ງທົ່ເຄືອ ພາໄປທາງເໜືອ ພາເມືອທາງໃຕ້ ບໍ່ຂ້ອງບໍ່ຄາ ແມ່ນຫຍັງ ?

໑໙໗. ແລ່ນລົງໜູມາລິດ ໆ ແລ້ວແລ່ນກັບເມືອ ແມ່ນຫຍັງ ?

໑໙໘. ລ່ອງກາງນາ ຫາກາງຂ່ອງ ຖ່ອງກາງເຮືອນ ແມ່ນຫຍັງ ?

໑໙໙. ຫລິແຫລ ຫລິແຫລ້ ຫລິແລ ຫລິລ່ຳ ກົກມັນຕ່ຳເຕັ້ຽ ໃບຊ້ອນບໍ່ມີ ແມ່ນຫຍັງ ?

໘໐໐. ເຫລັກຊິແດງ ໄປແທງຕາຜັ້ງ ຮາກມາຍັ້ງເຖິງເມືອງ ລະຄອນ ແມ່ນຫຍັງ ?

໘໐໑. ເວລາບໍ່ໃຊ້ເອົາໃວ້ເທິງຫົວ ເວລາຈະໃຊ້ຕ້ອງໂຍນຖິ້ມ ແມ່ນຫຍັງ?

໘໐໒. ຫົວຖືກຸບ ເອົາຕີນຈຸບນ້ຳ ແມ່ນຫຍັງ?

໘໐໓. ອີນ້ອຍໆແອວກິ່ວ ຂຶ້ນກົກງິ້ວຫລີໄຕ່ມີດານ ໃຈກ້າ ຫານບໍ່ຕົກຈັກເທື່ອ ແມ່ນຫຍັງ?

໘໐໔. ອີມະລຸງມຸງມົວ ຜົວບໍ່ມີຊ້ຳມີລູກມາຈ່ອງ ແມ່ນຫຍັງ?

໘໐໕. ອົນຂຍຸກໆຜູ່ຢູ່ລຸ່ມດິ້ນຕາຍຜູ່ຢູ່ເທິງສຳບາຍ ແມ່ນຫຍັງ?

໘໐໖. ອຸ້ມປຸ້ມທີ່ໄຂ່ເບື່ດ ດົມເຈັດດົມກິນບໍ່ໝົດ ແມ່ນຫຍັງ?

໘໐໗. ອຸ້ມລຸ້ມຂີ້ຊຸມ ຊຸ້ມຂີອູມລູມ ສີຫູ ສີຕາ ຫົກຂາ ທາງ ນຶ່ງແມ່ນຫຍັງ?

໘໐໘. ອຸ້ມລຸ້ມຢູ່ກາງໜອງ ຈອງຫອງຢູ່ກາງເຫລົ້າ ເຕົ້າເມົ້າກາງ ເຮືອນ ແມ່ນຫຍັງ?

໘໐໙. ອຸ້ມລຸ້ມທີ່ແມ່ງົວ ສິບດົນຕົວບໍ່ມີທິບປີ້ງ ແມ່ນຫຍັງ

໘໑໐. ອຸ້ມລຸ້ມທີ່ຫົວພີ ສີດຳ ອອກຫາກິນຍາມເຊົ້າ ແມ່ນ ຫຍັງ?

໘໑໑. ໂອ້ນອີ່ເອ້ນ ແອວອ່ອນສເນີໄໝ ລົງກະໄດ ເອົາຫົວ ລົງກ່ອນ ແມ່ນຫຍັງ?

໒໑໒. ອັລັກໄຂ່ກາ ຕົກລົງມາບໍ່ແຕກ ແມ່ນຫຍັງ?

໒໑໓. ເອົາບໍ່ໝັກ ຕັກບໍ່ເຕັມ ເດັມບໍ່ຈິດ ມິດບໍ່ຈາງ ແມ່ນ ຫຍັງ?

໒໑໔. ຮັກກໍຈູບ ບໍ່ຮັກກໍຈູບ ແມ່ນຫຍັງ?

໒໑໕. ຮຸ່ງມາກະແຍະກະແຍະ ຄ່ຳມາແປະໃສ່ກັນ ແມ່ນຫຍັງ?

໒໑໖. ຮຸ່ງມາຫ້ອຍຢູ່ຕ່ອງຕ້ອຍ ຄ່ຳມາກະຍ້ອຍເຂົ້າຮູ ແມ່ນ ຫຍັງ?

໒໑໗. ແຮ່ງຕໍ່ແຮ່ງສັ້ນ ແຮ່ງຕັດຍາວ ແມ່ນຫຍັງ?

໒໑໘. ເຮືອນເສົາດຽວສິບສີ່ພັນຫ້ອງ ພີ່ນ້ອງມາເຊົາບໍ່ມີບ່ອນ ຢູ່ ແມ່ນຫຍັງ?

໒໑໙. ເຮືອນຫລັງນຶ່ງມີສິບພັນຫ້ອງ ທຸກຫ້ອງທຸກນາງນອນ ແມ່ນຫຍັງ?

໒໐໒. ຢາກຍາກໃຫ້ບັ້ນ ຢາກສັ້ນໃຫ້ຕໍ່ ໝາຍຄວາມວ່າຢ່າງໃດ?

໒໒໑. ບໍ່ມີເມັຽບໍ່ອຶດລູກໃຊ້ ບໍ່ມີໄມ້ບໍ່ອຶດເຮືອນນອນ ໝາຍ ຄວາມວ່າຢ່າງໃດ?

໒໒໒. ໃຫ້ເຈົ້າພົ່ນເຮືອໄວ້ຫລາຍລຳແຮ່ທ່າ ໃຫ້ເຈົ້າໝ່າເຂົ້າ ໄວ້ເຕັມບ້ານທົ່ວເມືອງ ໝາຍຄວາມວ່າຢ່າງໃດ?

໒໒໓. ນອນສູງໃຫ້ນອນຂອ້າ ນອນຕ່ຳໃຫ້ນອນຫງາຍ ໝາຍ ຄວາມວ່າຢ່າງໃດ?

໘໔໔. ໝອບໆເຂົ້າຫົວເຫົ້າງ່າຍາງ   ຍ່າງໂຍ້ງໆຫົວແທບຂີ້ດິນ ໝາຍຄວາມວ່າຈັ້ງໃດ?

໘໔໕. ຟານກິນໝາກຂາມຂ້ອມໝີໄປຄາຄໍ່ມັ້ງ ມັ້ງບໍ່ຂີ້ສາມມື້ກະ ຕ່າຍຕາຍ   ກະຕ່າຍຕາຍແລ້ວຈອນຟອນກະເລີຍເນົ່າ ຈອນຟອນເນົ່າແລ້ວໝອນພັດຂ້ອນບຸ່ນໃນ ໝາຍຄວາມ ວ່າຈັ້ງໃດ?

໘໔໖. ກ້ານກ່າຍກ້ານ ກ້ານກ່າຍມາງກາຍ   ສາລິກາກາຍຈັບ ກ່າຍລົງນຳກ້ານ ແມ່ນຫຍັງ?

໘໔໗. ກົກມັນທ່ລຳຫຽນ ໝາກມັນລຽນນຳກ້ານ ແມ່ນຫຍັງ?

໘໔໘. ກົກເບັ້ນທວາຍ ປາຍເບັ້ນເຊືອກ ໃຜແກ້ບໍ່ໄດ້   ຕາ ແດງແກ້ກແຊກ ແມ່ນຫຍັງ?

໘໔໙. ກົກເບັ້ນທວາຍ ປາຍເບັ້ນເຊືອກ   ໃຜແກ້ບໍ່ໄດ້ມາພີ້ຊີ ບອກຄືນ ແມ່ນຫຍັງ?

໘໕໐. ກົ້ນຂອດໆແມ່ນກົ້ນຫຍັງ?

໘໕໑. ກົ້ນພອຍໆແມ່ນກົ້ນຫຍັງ?

໘໕໒. ກົ້ນຄູ້ລູ້ໂຄດໂລດ ແມ່ນກົ້ນຫຍັງ?

໘໕໓. ຂຽວເຫລື້ອມດັ້ງພຣະອິນ ບິນເບັ້ນຄືນົກ   ມີພັງສີຢູ່ ໝ້າເອິກ ແມ່ນຫຍັງ?

໘໕໔. ຂອ້າຟ້າລົງດິນ ຜົນພຣະຍາອິນໃນເມືອງມາກ ລື້ນໃນ ປາກພຣະຍາແຖນ ທຳພຣະຍາແຖນພໍ້າຮ່ອນແມ່ນຫຍັງ?

໘໓໕. ຄຸມມຸມໝ້າ ຜີເອົາໄປເຊື່ອງ ບາດວ່າສັກຣາດລ່ວງແລ້ວ
ຜີຊ້າສັ່ງດີ ແມ່ນຫຍັງ?

໘໓໖. ດິນຜູ່ດຽວນັບໄດ້ຮ້ອຍໝື່ນ ແມ່ນຫຍັງ?

໘໓໗. ດິນຕົກກ້າ ສາມຕາອອກຕານົ່ງ ກະຕ່າຍໝ້ ກິນກ້ຽງ
ບໍ່ຫລໍ ແມ່ນຫຍັງ?

໘໓໘. ຄວາຍບັກຕູ້ ຫູສອງ ທໍ່ານົ່ງ ຕາຢູ່ຂ້າງເຂົານັ້ນຢູ່ດາງ
ແມ່ນຫຍັງ?

໘໓໙ ເຈັຽກະດ້າງ ຫ້ອຍຢູ່ແຈຝາ ແມ່ນຫຍັງ?

໘໔໐. ສັດສີ່ຕີນກິນສັດຕີນດຽວ ສັດຫົວຂຽວກິນສັດໝ້າຂວ້າ
ແມ່ນຫຍັງ?

໘໔໑. ສັດຫາງຍາວໄປເຊົາງ່າໄມ້ ໄປຈູດກົ້ນສະດ່ອງໄປໄກ
ແມ່ນຫຍັງ?

໘໔໓. ສັດນົ່ງນັ້ນ ກິນໄມ້ເບັ່ນອາຫານ ກິນທາງທ້ອງຂີ້ອອກ
ທາງຫລັງ ບໍ່ກິນສັ່ງມາກິນແຕ່ໄມ້ ແມ່ນຫຍັງ?

໘໔໔. ສັດນົ່ງນັ້ນ ຄັນມັນຫາກິນໄດ້ ຄືນມາທ້ອງເບົ່າ ບາດຫາ
ກິນບໍ່ໄດ້ມາທ້ອງຕື່ງມາ ແມ່ນຫຍັງ?

໘໔໕. ສັກຈຸ໊ບຫລຸບປັບ ສອງເຂົ້າເໝັກເຕັກເຂົ້າຈຳບັກ ແມ່ນ
ຫຍັງ?

໘໔໖. ສະລະເງາະເກາະຄໍ ສະລະງໍເກາະກົ້ນ ມ້າລົ້ມກົ້ນໄຫລ
ອອກລິລັ້ນລິລັ້ນ ຮອດບ່ອນດັ້ນແລ້ວຖອດ ແມ່ນຫຍັງ?

໘໔໗. ສິ່ບາດພາດຮົ້ວຄົວຕົ້ມໃສ່ງາຍ ແມ່ນຫຍັງ?

໘໔໘. ສຸກໂຂ, ສຸກຂັງ, ສອຍອອຍ, ຈິມລິມ ດັງຄ້ອງຄຽງໃນ
ໝໍ້ ແມ່ນຫຍັງ?

໘໔໙. ສຸກໃນດິນ ບິນບົນອາກາດ ພາດປາຍໄມ້ພຣະເຈົ້ານິຣະ
ພານ ແມ່ນຫຍັງ?

໘໕໐. ຈຶ່ກັບຮູບຫົວຢູ່ນ້ຳ ໂຕຢູ່ເມືອງຄົນ ແມ່ນຫຍັງ?

໘໕໑. ດອກອັນນຶ່ງ ຈູມແຕ່ປາງພຣະເຈົ້າປານນີ້ບໍ່ບານ ແມ່ນ
ຫຍັງ?

໘໕໒. ດຳປານກາ ມີຕາທົ່ວໂຕ ອອກລູກທາງຕີນ ແມ່ນຫຍັງ?

໘໕໓. ຕູມໆກ້ອງສຽງດັງເທົ້າຫົວ ດັງຢູ່ຮອດຄູ່ນີ້ໃຜພໍ້ກໍແມ່ນ
ຕູມ ແມ່ນຫຍັງ?

໘໐໔. ໂຕຢູ່ບ່າ ຫາງຢູ່ບ້ານ ແມ່ນຫຍັງ?

໘໕໕. ໂຕຢູ່ໂຄກ ຂີ້ຢູ່ມ້າ ແມ່ນຫຍັງ?

໘໕໖. ໂຕມັນຢູ່ນາ ຕາມັນຢູ່ນຳກົກໄມ້ ແມ່ນຫຍັງ?

໘໕໗. ຖ່ຽອກາງດືນ ຍືນກາງມ້າ ແມ່ນຫຍັງ?

໘໕໘. ບັກຄັ້ງນັ້ງ ກົ່ງແຕ່ກົກຮອດປາຍ ທາງປາຍມັນເບັ້ນ
ລາຍກ້ານດົກ ກົກມັນເບັ້ນຂົນຊູມຊູ ແມ່ນຫຍັງ?

໘໕໙ ບັກສີ່ຫູມີຮູຮ້ອຍແຫ່ງ ມີແຕ່ກົ້ນຮູຂີ້ບໍ່ມີ ແມ່ນຫຍັງ?

໘໖໐. ບັກຫລັງຂົດ ໂຕນມ້າບໍ່ຂຸ່ນ ແມ່ນຫຍັງ?

໒໖໑. ບໍ່ກິນເຂົ້າ ບໍ່ກິນນ້ຳ ນັ່ງຢູ່ເສີຍໆ ແຕ່ເພິ່ນເຄີຍອາບນ້ຳ ປີລະເທື່ອ ແມ່ນຫຍັງ?

໒໖໒. ເບື້ອງຈີ່ບໍ່ກິນ ກິນເບື້ອງບໍ່ຈີ່ ແມ່ນຫຍັງ?

໒໖໓. ບັກອຸ້ມລຸ້ມ ໝັງຫຸ້ມບໍ່ໝໍ ແມ່ນຫຍັງ?

໒໖໔. ບໍ່ມີຊີ້ນ ບໍ່ມີໜັງ ບໍ່ມີດັງ ບໍ່ມີປາກມີແຕ່ແຂ້ວແຖວຈ້ ຖີ່ຖັນ ແມ່ນຫຍັງ?

໒໖໕. ນົກຈິບນ້ອຍ ກິນຂົນຕາງເຫຍື່ອບາດວ່າຄາບລູກຊີ້ນ ນ້ຳຕາຍ້ອຍຍ່າວລົງ ແມ່ນຫຍັງ?

໒໖໖. ນ້ອງຂອງຂ້ອຍຊື່ວ່າບັກທອງ ມັນຈອງທອງຫລິ້ນແຕ່ ຂັນໝາກ ແມ່ເຖົ້າຮ້າຍເອົາເຫລັກທັ່ງປາກ ເອົາສາກທັ່ງ ກົ້ນ ເບັ່ນໜ້າອີ່ຕົນແມ່ນຫຍັງ

໒໖໗. ໜອງນ້ອຍໆມີຫຍ້າແຫຍມແຍະ ເຖິງຍາມແລງແປະກັນ ຄູ່ມື້ ແມ່ນຫຍັງ?

໒໖໘. ປິ່ນປາກລົງສູ່ນ້ຳ ຫາງຂຶ້ນຮອດດອຍ ແມ່ນຫຍັງ?

໒໖໙. ແປໆຄີລົ້ນຟານ ຄານກິນຫຍ້າໃນຫົວຈອມປອກ ແມ່ນ ຫຍັງ?

໒໗໐. ປຽກກໍ່ສຸ່ມ ບໍ່ປຽກກໍ່ສຸ່ມ ແມ່ນຫຍັງ?

໒໗໑. ຜູ້ໃຫຍ່ໄປໄດ້ໜ້ອຍ ຜູ້ນ້ອຍໄປໄດ້ຫລາຍ ແມ່ນຫຍັງ?

໒໗໒. ມະໂນສິງຄົມ ຕັນໃຈມະໂນສິງຄິດ ມະໂນມັດແມ້ງ ພຣະນາງນ້ອງແຕ່ງກອນ ແມ່ນຫຍັງ?

໒໗໓ ນ້ຳບັກຂຽວສອງຂາພາແລ່ນ ເຮັດໃຫ້ແມ່ນມັກຊ້າຫລີ

ໄວ ແລ້ວແຕ່ໃຈເຈົ້າຂອງຜູ້ຂີ່ ແມ່ນຫຍັງ?

໔໗໔. ມີແຕ່ປາກມີແຕ່ລີ້ນຫາແຂ້ວບໍ່ເຫັນ ແມ່ນຫຍັງ?

໔໗໕. ມີລູກໃນທ້ອງຮ້ອງບໍ່ດັງ ໄປໜ້າມາຫລັງໄດ້ພໍສເມີກັນ ແມ່ນຫຍັງ?

໔໗໖. ຣິສີຢູ່ໃນຖ້ຳ ນອນຊັນຫົວເຂົ່າ ກິນແຕ່ຫຍ້າຕາງເຂົ້າ ບໍ່ຕາຍ ແມ່ນຫຍັງ?

໑໗໗. ລູກຈາກແມ່ໄປຢູ່ເມືອງບົນ ແມ່ມັນຢູ່ນຳດິນເຮົາເຫັນ ຄູ່ມື້ ແມ່ນຫຍັງ?

໔໗໘. ວັດນ້ອຍໆມີພຣະຫລາຍອົງ ປະຕູຂົງກຳແພງຫລາຍຊັ້ນ ແມ່ນຫຍັງ?

໔໗໙. ວັດບ້ານຂ້ອຍມີພຣະຫລາຍອົງ ເອົາມືບາຍມຸ່ມຄາຄູ່ມື້ ແມ່ນຫຍັງ?

໔໘໐. ຫາງຢູ່ນ້ຳໂຕມັນຢູ່ເທິງບົກ ແມ່ນຫຍັງ?

#47 ໔໘໑. ແຫເຫລືອລົ້ນ ເຫັນດິນມາຫາກບໍ່ແລ່ນ ຈັບບ່ອນໃດໄດ້ບ່ອນຫັ້ນ ຫາກແຫເລື້ອຍຄູ່ຍາມ ແມ່ນຫຍັງ?

\+ \+ \+

ຕອບ

໑. ຕິບເຂົ້າຫລືກ່ອງເຂົ້າ

໒. ກົບສາວໄມ້

໓. ອິ້ວຝ້າຍ

໔. ແກງໝາກຫອຍ

໕. ຜັກແວ່ນ

໖. ກົກເສົາ ແລະຫລັງຄາເຮືອນຍາມຝົນ

໗. ຕົ້ນຮ້ອງກົກກ້ວຍ ດອກຮ້ອງ ໝາກປີ ໃບຮ້ອງ ໃບຕອງ

໘. ເຫົາ

໙. ກົກຂາມ

໑໐ ໃບບົວ

໑໑ ໝາກກ້ວຍ

໑໒. ກົກສາມພັນງ່າ

໑໓. ລຳກະຜຸກ

໑໔. ສາຍໄຟຟ້າ

໑໕. ປີກ້ວຍ

໑໖. ແຂ້ວຫລືດຸມເສື້ອ (ໄຫດຳ?)

໑໗. ໝາກມັດ

໑໘. ຫີນຝົນພ້າ

໑໙. ລູກທະມູ

໔໐. ໃບບົວ ໃບບອນ

໔໑. ມີດຕັດຫລືມີດກະໄຕຕັດຜົມ

໔໒. ໝາກມັດສີແດງ

໔໓. ຄອັນໄຟໃນເຮືອນ

໔໔. ເຂົາງົວ

໔໕. ເສັ້ນຜົມ

໔໖. ຫາງຫຽວ

໔໗. ຫູ

໔໘. ກອງແລ

໔໙. ຫຽນກັບກອກຢາທີ່ພັນດ້ວຍໃບຕອງ ຫລືໃບໄມ້ອື່ນ

໕໐. ໝາມຫລືສ້ຽນບໍ່ກຕີນ (ບົ່ງໄດ້ເອົາຖິ້ມບົ່ງບໍ່ໄດ້ປະຄາຕີນ)

໕໑. ຕົ້ນຊິງຫລືຕົ້ນແຮ້ວຫ້າງສັດ– ໂຮງກະບອງ–ໄມ້ຄານ

໕໒. ຂົນຕາເວລານອນຫລັບ

໕໓. ແມງດັບເດື່ອງ (ໂຕສີຂຽວ ມີໄລແຫລມຢູ່ອົກ)

໕໔. ກ່ອງເຂົ້າຫລືຕີບເຂົ້າ (ເຂົ້າບໍ່ເຕັມອັດລົງແຈບ ເຂົ້າສອດ
ປາກອັດບໍ່ແຈບ)

໕໕. ຕົ້ນນາຫລືຕົ້ນແຫນາ

໕໖. ໝາກພ້າວ

໕໗. ກົກໝາກເດັ່ງ

໓໗. ກົກໝາກເດັງ— ໝາກເຂືອຂື່ນ

໓໘. ບຸມ, ບາບ, ບົ່ມຢາແລະຕັນຫາ

໔໐. ຫອຍ

໔໑. ຂີ້ໄຂ່ຂາງ (ຂອງແມງວັນ)

໔໒. ຈິກີ (ຂີ້ໄກ່ກີກໍອ່າ)

໔໓. ທ້ອງຟ້າ (ມັນມີສີ່ຂຽວຫລືສີແຫລ້ ດີ ກັບເບິ່ງດົງໄມ້ແຕ່
ໄກ ໆ)

໔໔. ມິດຈະມາກພິບສີສຽດ

໔໕. ກະບອງ (ກະໄຕ້ກໍອ່າ)

໔໖. ລົມ

໔໗. ຄັນໂຊ້ສະມ້າ

໔໘. ກອກຢາ

໔໙. ຄັນເບັດ

໕໐. ສຽມຫລືໝາກຈົກ, ຊ້າງ, ປູ

໕໑. ແຂ້ວໃນປາກ

໕໒. ກ້ອງຖ່າຍຮູບ (ຂນາດທີ່ຕ້ອງຕັ້ງຂາຕັ້ງ)

໕໓. ຄີໄຟທີ່ມີກ້ອນເສົ້າສາມກ້ອນແລະໄຟພອນລຸກ

໕໔. ຄຽງເຫລັກສຳລັບຕັ້ງໝໍ້

໔໕. ຄືໄຟມີສາມກ້ອນເສົ້າ ໝໍ້ທີ່ດຳແລ້ວຂຶ້ນຕັ້ງ ສຽງນ້ຳໃນ
ໝໍ້ຟົດປຽບໃສ່ປີ່ ແສງໄຟແລບເລັຽກົ້ນໝໍ້ ປຽບໃສ່ກັບ
ຫລາວ

໔໖. ຮູດັງ

໔໗. ຕອງເດີຕັດຜົມອ້ອມຫົວຄົນ

໔໘. ຄົນສອງຂາຂຶ້ນຂີ່ແຍ່ງຊ້າງ ແຍ່ງຊ້າງຢອງເທິງຫລັງຊ້າງ

໔໙. ຫົວເຂົ່າສອງກ້າຂອງຄົນ

໕໐. ຫູ

໕໑. ອາການຂອງຄົນ ຝົນຜ້າ ຝົນມີດ

໕໒. ຄົນຈຳພວກໝໍລຳເຣື່ອງ ຫລືພວກຫລັ້ນລີເກ

໕໓. ອາການຂອງໝາເຊີງກັນ

໕໔. ຄົນຫາມໝູຫລືຫາມຟານກໍໄດ້

໕໕. ອາການຍ່າງຂອງເຕົ່າ, ສີ່ຄົນ=ຂີ່ຂາ ສຽກແບ້ນ= ຫົວ
ມັນຫລູບອອກຫລູບເຂົ້າ

໕໖. ຄົນຫາມໝູຫລືຫາມຟານກໍໄດ້

໕໗. ຂ້ອງຫລືພວງທີ່ມີງາອັດປາກ

໕໘. ມຸ້ງ

໕໙. ກະດຸ້ງ (ສະດຸ້ງຫລືຍໍກໍອ່າ)

໖໐. ແສງແດດ

໗໑. ພັງຈີ່, ໄຂ່ຕົ້ມ, ຫອຍ (ຕົ້ມສຸກຝາໄງອັດປາກມັນຂົວະ ອອກ)

໗໒. ຝອດນ້ຳ

໗໓. ແຫວນຫົວໃຫຍ່ກ້ຽງ ໆ

໗໔. ຫລັກຮົ້ວແລະກົກໝາກສາລີ

໗໕. ຄົນເມື່ອຍັງນ້ອຍມັນຄານ ໃຫຍ່ແລ້ວຍ່າງສອງຂາ ຍາມເຖົ້າເອົາໄມ້ເທົ້າຕື່ມຕາງຂາອີກອັນນຶ່ງ

໗໖. ຫູຄວາຍ ຫລືຫູງົວ

໗໗. ຟືມຕ່ຳຫູກ ເວລາພົ່ດຟືມ

໗໘. ກ້ອນເສົ້າ ໝໍ້ (ທີ່ໃຊ້ຈົນດຳແລ້ວ) ສຽງນ້ຳໃນໝໍ້ທີ່ພອນຮ້ອນ ແສງໄຟທີ່ແລບເລັຽກົ້ນໝໍ້

໗໙. ເງົາຜາ (ຮົ່ມຂອງໜ້າຜາໜ້າພູ)

໘໐. ໄຫອາກ

໘໑. ທາງເສືອຂອງເຮືອ (ໝາກກະລົກເຮືອ)

໘໒. ກະຕ່າຍຂູດໝາກພ້າວ

໘໓. ແປງສີແຂ້ວ ເວລາສີແຂ້ວ, ອາການຈັບຂາໄມ້ຂູດລົ້ນໄປຂູດລົ້ນມາ ມັກອ້າປາກແລະຕາເຫລືອກ

໘໔. ເຮືອ

໘໕. ຫົນທາງ ປຽບໃສ່ເຊືອກ ຄົນເດີນຖນົນປຽບໃສ່ຄວາຍ

໘໖. ຂຽງໝໍ່ກຊີ້ນໝໍ່ກລາບ

໘໗. ກົກໄດ້ນ້າຫລືໄດ້ມຸ່ມ

໘໘. ໄມ້ຢຽບຫູກ

໘໙. ສ້າງມ້າ

໙໐. ດັງ

໙໑. ດົກມອງ

໙໒. ຫົວຜັກທຽມ ຫລືຫົວຜັກບົ່ວ

໙໓. ພຣະພຸທຮູບ (ຮອດເດືອນຫ້າຈຶ່ງມີຜູ່ມາສົງນ້າ)

໙໔. ຫວດຫລືມວຍໜຶ້ງເຂົ້າ (ໃຊ້ຈົນດຳແລ້ວ)

໙໕. ແມງຕັບເຕົ່າ

໙໖. ເງົາຂອງຄົນຫລືສັດ

໙໗. ສໍ່ວ (ແຮ່ງຕີແຮ່ງກັດ)

໙໘. ໝາກຂາມ

໙໙. ໝາກເຜັດຂຽວ

໑໐໐. ໄຂ່ຂາງ, ໝອນ, ແມງອັນ

໑໐໑. ຂີ້ຊ້າງ

໑໐໒. ໝາກເຟືອງ (ຕົກລົງຂ້າງໃດ ຂ້າງນຶ່ງກໍ່ຍັງຊື່ອອກຢູ່)

໑໐໓. ກໍສິງໃດ

໑໐໔. ຊ້າງ, ປວກ, ພວກອົງພວກກວາງ

໑໐໕. ຕາປູ (ຕອກໄມ້)

໑໐໖. ຫົນທາງ

໑໐໗. ທາງທຽວ

໑໐໘. ໄຫປາແດກ (ເວລາຈົກມັນແປດເປື້ອນສອກ)

໑໐໙. ເຕົ້າປູນຄ້ຽວໝາກ

໑໑໐. ດາງໃຍແມງມຸມ

໑໑໑. ລັກສນະຄົນເຂັນຝ້າຍ

໑໑໒. ຄົນສັກສຸ່ມເອົາປາ

໑໑໓. ຖ້ອຍເປົ່າ

໑໑໔. ຖຽງນາ, ເປົ່າແຄນ

໑໑໕. ລີ້ນໃນປາກ

໑໑໖, ມຸ້ງກາງນອນ

໑໑໗. ຄຽງ ໝໍ້ ໝົ້ງ ທອດ

໑໑໘. ຫລອດຝ້າຍຫລືຫລອດໄໝໃນກະສວຍ

໑໑໙. ສຽງປືນ (ລາງຄົນວ່ານົກຂີ້ຖີ່ຮ້ອງ) ຄັນຊິງຫລືຄັນແຮ້ວ
ສັກສຸ່ມ, ເຊືອກຜູກຄັນໄດ, ໄມ້ຄານ

໑໒໐. ຕັກແຕນ

໑໒໑. ເຮືອ

໑໒໒. ຂີ້ກະເດືອນ, ເຈັຽ

໑໘໓. ຕົ້ນກ້ວຍ

໑໘໔. ນົກປິນ (ປິນເພິງ)

໑໘໕. ໝາກແຕ້ທູ

໑໘໖. ເຕື່ອ

໑໘໗. ໝ່ອຍຕາ

໑໘໘. ເອົາພານລ້ອມໝາກມີ້ ຍ້ານເໝັ້ນມາກິນ

໑໘໙. ໄບ້ຕິນ

໑໙໐. ແກງປາ, ພຍາມາກ=ຈອງ, ຜູ່ສາວເຈົ້າຂອງນັ່ງເຝົ້າ

໑໙໑. ແອ່ນສຳລັບແຍງ

໑໙໒. ທຽນໄຂ

໑໙໓. ງ, ບິງ

໑໙໔. ງ, ເດືອໄມ້, ບິງ, ບ່ອງ

໑໙໕. ເຫົາ

໑໙໖. ບອຍຫລືໂອຕັກນ້ຳ

໑໙໗. ເຮືອແລະເຮືອບິນ

໑໙໘. ຮູງກິນນ້ຳ

໑໙໙. ຍຸງບິນອ້ອມຫົວເຮົາ

໑໔໐. ກ່ອງເຂົ້າຫລືກະຕິບເຂົ້າ

໑໔໑, ອູ່ນອນເດັກນ້ອຍ

໑໔໒. ກໍໄຜ່

໑໔໓. ຂີ້ມູກ

໑໔໔. ຕຸ້ມຫູ

໑໔໕. ແຫ (ຂາໄປໃຊ້ມືອອກຫວ່ານ ຂາກັບມາປໍ້ອມມາ)

໑໔໖. ຍໍ (ສໍາລັບຍົກເອົາປາ)

໑໔໗. ບ່ອມຕັກນ້ຳ ດຸມັ້ງຖ້າຢູ່ເທິງ

໑໔໘. ລຳອ້ອຍ ປູ

໑໔໙. ກົກໝາກຮຸ່ງ

໑໕໐. ກ້ວຍ

໑໕໑. ໃບໝາກເອິກ

໑໕໒. ປາດັບຂອງ

໑໕໓. ຍອດທາດ (ດອງປີທາດ)

໑໕໔. ເຕົ້າປູມດ້ຽວໝາກ

໑໕໕. ຮອຍຕີນ

໒໕໖. ແຫ

໑໕໗. ໄປຖ່າຍ (ເວລາປວດຫລາຍ)

໑໕໘. ໄປຫາຂອງຊໍາຣະ ມາບ່ທາ (ໄມ້ແກ້ງຫລືເຈ້ຽຊໍາຣະ)

໑໕໙. ມຸ້ງກັນຍຸງ

໑໖໐. ດວາຍ, ໄຖຫລືດາດ, ດົມ

໑໖໑. ແມງມຸມ, ຫອຍ, ຈຸດຈີ່ເຣັດເປົ້າຂີ້ຄວາຍ

໑໖໒. ຄວາຍ, ໄຖ, ຄົນໄຖນາ

໑໖໓. ຕາ, ມື, ປາກ, ກົ້ນ

໑໖໔. ໂລງໃສ່ຂອນຜີ

໑໖໕. ຫີນຜົນມິດ, ດຳເບິ່ງຄົນມິດ

໑໖໖. ພະນຽງໄຖ

໑໖໗. ຈີ່ລ່, ຈີ່ມາຍ

໑໖໘. ພຣະພຸທຣູບ

໑໖໙. ຈີ່ລ່, ຈີ່ມາຍ

໑໗໐. ຫູສອງກ້າ

໑໗໑. ຫັບໃສ່ໄກ່ຕໍ່

໑໗໒, ຫີນທາງ

໑໗໓. ໂໝມປອກ

໑໗໔. ມົວຕາກ້ານິ້ງຍັງບໍ່ເຫັນ, ມົວສອງຕາຫລຽວບໍ່ເຫັນ

໑໗໕. ມ້າຊອຍຢາດູດ

໑໗໖. ລູກປືນ

໑໗໗. ໝາກມີ້ສຸກ

໑໗໘. ແມ່ຊີຫລືແມ່ຂາວ

໑໗໙. ເຫື່ອ (ເສຫາ–ເຫື່ອ)

໑໗໐. ການພົ້ນໄມ້ ຂີ້ຂວານຕົກ

໑໗໑. ສຽງໄມ້ບົ້ນຜ້າຍໃສ່ຫລອດ

໑໗໒. ການເລື່ອຍໄມ້ ຂີ້ເລື່ອຍຕົກ

໑໗໓. ການຍິງປືນ

໑໗໔. ທຳງົວ ໆ (ທົວງຳ ເອົາປົ້ນ)

໑໗໕. ປາສລາມ, ຕຳຣວດສລາມບົກ

໑໗໖. ດິນສໍ, ປາກກາເວລາຂຽນບົ້ນ

໑໗໗. ໄມ້ຈິບປູນ

໑໗໘. ເຂັມ

໑໗໙. ໄຖ, ໄຖນາ

໑໘໐. ເສັ້ນຜົມ

໑໘໑. ເຂັມຕົກພອງ

໑໘໒. ຕາເວັນ

໑໘໓. ໄຊໃສ່ປາ

໑໘໔. ກອງຂີ້ຄວາຍ

໑໘໕. ເຂາະແຂວນ, ດ່ງົວດຳຄວາຍ

໑໘໖. ຕີນ

໑໘໗. ຂີ້ມູກເດັກນ້ອຍ

໑໘໘. ໄຖ, ຕາດບົ້ດເດີ່ນ, ຍູກວາດ

໑໙໙. ກົກດອກໝາໄພ້

໔໐໐. ມັນແກວແດງ (ມັນດ້າງແດງ)

໔໐໑. ສມໍເຮືອໃຫຍ່ (ເວລາຈະອອກເຮືອບໍ່ໃຊ້ ຕ້ອງກູ້ສມໍເຮືອນັ້ນຂຶ້ນ ເວລາຈະຈອດເຮືອຕ້ອງຖິ້ມສມໍລົງເກາະພື້ນ)

໔໐໒. ໄຫເຂົ້າ

໔໐໓. ມົດແດງ (ມົດແດງແມວອື່ນທີ່ຄ້າຍຄືກັນນີ້ກໍໄດ້)

໔໐໔. ເຂາະແຂວນຄໍງົວຄໍຄວາຍ

໔໐໕. ຜູ່ຢູ່ລຸ່ມແມ່ນປາຖືກເບັດ ຜູ່ຢູ່ເທິງແມ່ນເຈົ້າຂອງເບັດດີໃຈ

໔໐໖. ເຕົ້າປູນສຳລັບຄ້ຽວໝາກ

໔໐໗. ຄົນຂີ່ມ້າ (ຄົນຖືເບັ່ນຊຶນແມວນຶ່ງ ມ້າກໍຖືເບັ່ນຊຶນແມວນຶ່ງ)

໔໐໘. ກ້ອນໂງ່ນຫີນກາງນ້ຳ, ເສືອ, ແມວ

໔໐໙. ຈູມປອກນ້ຳ ຫລືກ້ອນຟອງຝອດນ້ຳ

໔໑໐. ບາດຂອງຄຣູບາ

໔໑໑. ໝາແມ່

໔໑໒. ພໍ່ອຍຕາ

໔໑໓. ຂັ້ນຍາ, ໂລພະ, ຕັນຫາ, ບຸນກຸສົນ, ບາບ

໔໑໔. ໝາກທອຍຈູບ ຕ່ອຍກົ້ນແກງຫລືອ່ອມ

໔໑໕. ຕາສອງກ້າ

໔໑໖. ໄລດັດປະຕູເຮືອນ

໔໑໗. ກອກຢາ, ທົນທາງ (ເຮັດໃຫ້ຍາວ ມັກເວົ້າວ່າຕັດທາງ)

໔໑໘. ໃນໝາກງາທີ່ຢູ່ໃນໜ່ວຍຂອງມັນ

໔໑໙. ຈ່ມ້ອນ

໔໒໐. ເພິ່ນປຽບໃສ່ວ່າ ຄົນເຄີຍເປັນສ່ຽວເປັນເພື່ອນກັນ ເປັນພີ່ນ້ອງກັນ ເປັນຜົວເປັນເມັຽກັນ ຖ້າເກີດມີຄວາມຜິດໃຈກັນ ຖ້າຢາກຍືດຍາວຕໍ່ກັນເມື່ອພາຍໜ້າ ໃຫ້ຕັດການວິວາດຜິດຖຽງ ຕັດຄວາມໃຈຮ້າຍໃຈຄຽດຕໍ່ກັນນັ້ນເສັຽ ແຕ່ຖ້າຢາກໃຫ້ທາງໄມຕຣີນັ້ນມັນສ້ຽງສຸດລົງທີ່ນັ້ນ ກໍໃຫ້ຕໍ່ການວິວາດຜິດຖຽງ ໃຫ້ເຮັດໃຈສັ້ນແກ້ແຄ້ນ ເຮັດໃຈຮຸນຮ້າຍຕໍ່ໄປ ໄມຕຣີກໍມີແຕ່ຈະສັ້ນແລະສຸດລົງ

໔໒໑. ໄດ້ແກ່ຄຣູບາອາຈານຢູ່ວັດ ບໍ່ມີເມັຽແຕ່ມີລູກສິດເຕັມວັດ ຕາມໃຈແຕ່ຈະໃຊ້ (ເຈົ້ານາຍດີໆ ໃນໂຮງການ-ຫລວງກໍຄືກັນ) ຕອນສອງພາຍເຖິງຄຣູບາອີກກໍໄດ້ ໄປບ້ານໃດວັດໃດກໍມີກະດີໃຫ້ນອນ ຫລືພາຍເຖິງຄົນດີມີໃຈກວ້າງຂວາງ ໄປບ່ອນໃດກໍມີຄົນຮັບຕ້ອນໃຫ້ກິນໃຫ້ນອນເຮືອນດັ່ງນີ້ກໍໄດ້.

໔໒໒. ເພິ່ນເວົ້າປຽບທຽບ ການສ້າງຄຸນງາມຄວາມດີຕໍ່ເພື່ອນ

ບ້ານເພື່ອນເມືອງ ຖ້າຄາວຈະຂ້າມນ້ຳໄປທີ່ໃດ ໃຫ້ໃຜ
ເອົາສົ່ງຂ້າມ ຫລືຢືມເຮືອໃຜກໍ່ບໍ່ຍາກ ແລະບຸກຄົນດັ່ງ-
ກ່າວຂ້າງເທິງ ເປັນຜູ່ຮູ້ຜູກໄມຕຣີບໍ່ຂີຖີ ມີຂອງກິນໝັ້ນ
ຢື່ນເຊົ້າສົ່ງແລງ ແກ່ໝູ່ຄູ່ຕາມມີຕາມເກີດ ຜູ່ນັ້ນໄປໃສ
ບໍ່ອຶດເຂົ້າກິນ ທໍ່ກັບໝ່າເຂົ້າໝົ້ງເຂົ້າໄວ້ທຸກເຮືອນແລ.

໘໓. ຍົກຕົວຢ່າງ ເຮົາໄປນອນຫ້າງຍິງສັດ ຕ້ອງນອນຣະວັງ
ຂ້າງລຸ່ມ ເພື່ອຈອບເບິ່ງສັດທີ່ເຮົາຕ້ອງການຍິງ ຫລືຣະ
ວັງຈະມີສັດຮ້າຍເສືອຫລືໝີເປັນຕົ້ນ ຕອນສອງນັ້ນເຮົາ
ນອນຕ່ຳຕ້ອງນອນຫງາຍ ຣະວັງຂອງຢູ່ເທິງຈະຕົກໃສ່
ຢ່າງນອນທ້ອງກົກໄມ້ເປັນຕົ້ນ ຫລືຈະເອົາສຸພາສິດວ່າ
ນອນຂວ້ຳໃຫ້ຫລຽວເບິ່ງເຊືອກຄວາຍ (ວ່າມັນຢູ່ໃນ-
ຄອກບໍ່ ຫລືຖືກຂະໂມຍລັກແກ້ໄປແລ້ວ) ນອນຫງາຍ
ໃຫ້ຫລຽວເບິ່ງໄພຫຍ້າ (ທີ່ມຸງເຮືອນວ່າບ່ອນມັນຫ່າງມັນ
ຈະຮົ່ວ) ດັ່ງນີ້ເປັນຄຳແກ້ໃນຕົວກໍ່ໄດ້

໘໔. ຕອນທີນຶ່ງເພິ່ນເອົາເປັນເຄື່ອງປຽບທຽບວ່າ ຄົນທີ່ມີ
ກິຣິຍາມາຣະຍາດຄ່ຽມຄົມ ຮູ້ຈັກອ່ອນນ້ອມຕໍ່ຜູ່ຫລັກຜູ່
ໃຫຍ່ຜູ່ເຖົ້າຜູ່ແກ່ ຜູ່ນັ້ນຍ່ອມເປັນຜູ່ສູງດ້ວຍກຽດດ້ວຍ
ຍົດ ມີແຕ່ຜູ່ຍົກຍໍສໍຣະເສີນ ບໍ່ມີກົດກຽດຕິຍົດໃຫ້ຕ່ຳ
ລົງ ຕອນທີສອງເພິ່ນເອົາປຽບທຽບ ໃສ່ຄົນທີ່ບໍ່ມີຍົດບໍ່ມີ

ວິຊາ ຊ້ຳພັດກົດອາດກົດຊົງໃຫຍ່ສູງ ບໍ່ຮູ້ອ່ອນນ້ອມ–
ຖ່ອມຕົນຕໍ່ຄົນອື່ນ ມີແຕ່ຜູ້ອື່ນຈະຕິຕຽນວ່າເບັ່ນຄົນເຕົ່າ
ຕ້ອຍ ແມ່ນມີໜ້າທີ່ການສູງຄົນກໍເວົ້າປຽບຍ່ຳ ໃຫ້ຕ່ຳລົງ
ແທບພື້ນດິນ ເວົ້າງ່າຍ ໆ ກໍວ່າ ງ່າໄມ້ທີ່ມີໝາກຍ່ອມ
ອ່ອນລົງ ສ່ວນງ່າໄມ້ທີ່ບໍ່ມີໝາກມັນມັກດີດເດ່ສູງຫັ້ນແລ

໘໘໕. ຈະຂໍປຽບໃຫ້ຫລຽວເຫັນແຕ່ແມວດຽວ ເຊິ່ງຜູ້ອ່ານ
ອາດຈະເອົາໄປປຽບໃສ່ແມວອື່ນ ໆ ອີກກໍໄດ້

- ລູກ(ຟານ)ເຮັດຊົ່ວ(ກິນໝາກຂາມບ້ອມ)
- ເຮັດໃຫ້ເສັຽໜ້າເສັຽຕາ ເສັຽເງິນຄຳຂອງພໍ່ແມ່(ຄາຄໍ່ມັ້ງ)
- ລູກນັ້ນ ເມື່ອພໍ່ແມ່ບໍ່ເອື້ອເຟື້ອຊ່ອຍແກ້ (ມັ້ງບໍ່ຂື້) ກໍ
ຕ້ອງຮ້ອນຮົນຈົນເຖິງໂທດ (ກະຕ່າຍຕາຍ)
- ເມື່ອລູກຖືກໂທດສະຖານໃດ ໆ ກໍຕາມ ພໍ່ແມ່ (ຈອນ–
ຟອນ) ກໍຕ້ອງຍາກນຳ ເສັຽຊື່ສຽງນຳ(ເນົ່າ)
- ເມື່ອເສັຽຊື່ເສັຽຊັບ ກໍມີແຕ່ຄົນຈະຫຍ້ຫຍັນໃຫ້ຈິບຫາຍ
ອາຍອອດຕື່ນ(ໝອງບ້ອນບຸ່ມໃນ) ດັ່ງນີ້ແລ

໘໘໖. ໄພຫຍ້າມຸງເຮືອນ ຊຶ່ງເອົາຕອກມັດຕາມກອນຊ້ອນກັນ
ລົງມາ

໘໘໗. ກົກເຫືອງ (ປູກເອົາເປືອກເຮັດປໍ ຄ້າຍ ໆ ພອກບ່ານ)
ຫລືຮອງເຂົ້າ

໘໒໘. ແຊກທີ່ເຮັດດ້ວຍຫວາຍມີເຊືອກຢູ່ປາຍສຳລັບມັດ

໘໒໙. ຄືນສຳລັບຕີໄກ່ ທີ່ຂະເຈົ້າເອົາຫວາຍເຮັດກົກ ເອົາເຊືອກເຮັດບ້ວງຢູ່ທາງປາຍ

໘໓໐. ກົ້ນຫອຍ

໘໓໑. ກົ້ນຂອງມານໝາກສາລີ ຫລືເຂົ້າໂດດ

໘໓໒. ກົ້ນຂອງສ້ອມ, ກົ້ນຂອງໄຊທີ່ເອົາໄປໃສ່ເອົາປາ

໘໓໓. ແມ່ນແມງຄັບຂຽວ, ທີ່ເອິກມີລາຍຄ້າຍໂຕໜັງສື

໘໓໔. ຫອຍ, ເຫົາ, ໝາກລິ້ນໄມ້(ຫລືໝາກລິ້ນຟ້າ) ໝາກເຂືອອື່ນ.

໘໓໕. ອຶ່ງ, ຍາມແລ້ງມັ້ນເຂົ້າບົ່ກຫລືເຂົ້າໄງ ຍາມຝົນປີໃໝ່ຈຶ່ງອອກມາ

໘໓໖. ຄົນຫົວລ້ານ

໘໓໗. ໝາກພ້າວ ຕາມທັມມະດາໝາກພ້າວມີສາມຕາ ແຕ່ມັນອອກໜໍ່ຈະຕ້ອງອອກໜໍ່ດຽວ ເມື່ອຄົນຜ່າເອົາກະຕ່າຍຂູດເອົາຊີ້ນມັນ ປຽບວ່າກະຕ່າຍກິນ

໘໓໘. ແມ່ນຄົນຊີງ ຫລືຊີງທີ່ມີທາງແບບເກົ່າ

໘໓໙. ແມ່ນເບັ້ຽສຳລັບເບັ້ຽຟ້າຍ

໘໔໐. ເຕົ່າກິນເຫັດ, ເບັດກິນຫອຍ

໘໔໑. ໄມ້ສາມຕາແຫລວ ເອົາໄມ້ມາສາມຂັດກັນຖືວ່າ ກັນເຄາະກັນຈັງໄຮ

໘໔໒. ບັ້ງໄຟທາງ

໘໔໓. ກົບສາວໄມ້

໘໔໔. ປືນຂອງນາຍພານ ຖ້າຍິງສັດໄດ້ລູກປືນບໍ່ມີ ບໍ່ໄດ້ຍິງສັດ ລູກປືນຍັງຢູ່ທ້ອງ

໘໔໕. ໄມ້ດັດຕາໜູ ເວລາເອົາຫຍ້າລົບຫລັງຄາເຮືອນ ຕາມສມັຍທີ່ຍັງເອົາໄມ້ຫຍ້າມຸງເຮືອນ

໘໔໖. ແມ່ນດົນດາດນາ ເມື່ອໄປຮອດດົນມາແລ້ວ ຕ້ອງຖອດຫລືຍົກດາດກັບດີນ

໓໔໗. ແມ່ນຜັກຕໍ່ານິນ ພາສາໄທຮ້ອງວ່າ ຜັກຕໍາລຶງ ແລະຕໍາລຶງນັ້ນຖ້າເບັ້ນເງິນກໍ່ ໔ ບາດເບັ້ນນຶ່ງຕໍາລຶງ ຖ້າເບັ້ນນ້ຳພັກກໍພັກສີບາດຕໍ່ນຶ່ງຕໍາລຶງ

໘໔໘. ຈີ່ໝັງ, ຕົ້ນກອຍ, ໄມ້ຈົ໊ມຫອຍ, ບ່ອງຈອງ

໘໔໙. ເຂົ້າພົ໊ນ, ເຜົ໊ງ, ເຄືອງ້ອນໝູ (ທີ່ວ່ານີ້ເຂົ້າໃຈກັນວ່າພຣະພຸທເຈົ້ານິພານຍ້ອນສເວີຍ ໝູງ້ອນ)

໘໕໐. ດາວຊ້າງ (ດາວຊ້າງນັ້ນ ມີແຕ່ຮູບຕອນຫົວແລະງວງມີ ໆ ໜ່ອຍ)

໘໕໑. ຈູມຄ້ອງ

໘໕໒. ແຫທີ່ຍ້ອມເລືອດ ແລະໃສ່ລູກກົ່ວທາງຕີນແລ້ວ

໘໕໓. ໝາກຕູມ

໒໕໔. ຫາງເຫນຜັກໄໝ (ເດືອຫາງໝູກໍວ່າ)

໒໕໕. ຂົ້ຈູມປອກ

໒໕໖. ໝາກຕາປາ

໒໕໗. ກົກຂົ້ເຫນ, ກົກກາງຂອງ

໒໕໘. ເຂົາຄວາຍ

໒໕໙. ດາງຕິ່ງປາ ຫລືສະດຸ້ງຕຶກປາ

໑໖໐. ເບັດໃສ່ເອົາປາ

໒໖໑. ພຣະພຸທຣູບ (ເຖິງເດືອຫ້າຕຸດສົງການຈິງທີ່ຜູ້ເອົາມ້າໄປ
ສົງ)

໒໖໒. ກອກຢາ—ດູດສົ້ມບ່ຈູດໄຟ

໒໖໓. ກອງ—ຢ່າງກອງເພນເບັ້ນຕົ້ນ

໒໖໔. ຫວີສໍາລັບຫວີຜົມ

໒໖໕. ແໝບຫລົກໝອດ ຖ້າແໝບພິບຊົ້ມຫລືພັງເຈົ້າຂອງ
ເຈັບນ້າຕາອອກ

໒໖໖. ບັ້ງສໍາລັບຕໍາໝາກຂອງຜູ້ເຖົ້າທີ່ເຮັດດ້ວຍທອງເຫລືອງ

໒໖໗. ໜັງຕາແລະຂົນຕາ

໒໖໘. ມ້າໃຫຍ່ສາຍຕ່າງໆຢ່າງມ້າຂອງ ທາງ (ບ່ອນເກີດເດີມ)
ຢູ່ເທິງພູ ສ່ອນປາກນ້າມັນມັກລົງສູ່ທະເລ

໒໖໙. ມິດແຖ—ເຂົາແຖຍາມຕັດຜົມຫລືແຖຜົມ

໔໗໐. ສຸ່ມສັກເອົາປາ (ເບິ່ງການເຂົ້າໃຈສຽງຜິດ ຄວາມຈິງ
ຢາກວ່າ "ປຽກກໍ່ຊຸ່ມບໍ່ປຽກກໍ່ຊຸ່ມ")

໔໗໑. ໝາກຫຍ້າທີ່ຕິດສົ້ງຄົນ– ເດັກນ້ອຍມັນຕ່ຳ ແລະບໍ່ຮູ້ຮື້
ຂາສົ້ງຂົ້ນຈຶ່ງຕິດຫລາຍ ກົງກັນຂ້າມກັບຜູ່ໃຫຍ່

໔໗໒. ເຂົ້າປຸ້ນ, ສົງໄດ, ເຂົ້າຕົ້ມເອົາປໍ່ມັດ ຕ່ອນແກງກັບ
ນາງຜູ່ແຕ່ງກິນ

໔໗໓. ມ້າກ້ານກ້ວຍ ຜູ່ຂີ່ຈະແລ່ນໄວຫລືຊ້າກໍຕາມໃຈຕົວເອງ

໔໗໔. ລົ້ນກ່ອງເຂົ້າ

໔໗໕. ລູກຄິດສຳລັບໄລ່ເລກຂອງຈີນ

໔໗໖. ຈີ່ຫລ່ ຫລືຈີ່ນາຍ

໔໗໗. ດາວໄກ່ນ້ອຍ (ລູກ) ແມ່ໄກ່ຍັງຢູ່ນຳຄົນ

໔໗໘. ຮັງເຜິ້ງ

໔໗໙. ເວົ້າກັບ - ວັດບ້ານຂ້ອຍມີພຣະຫລາຍອົງ ເອົາມືບາຍ
ຜ້າຄຸມສູ່ມ

໔໘໐. ແພທາງຄວາຍ ຫລືແພທາງໝາຈອກ

໔໘໑. ແທຕຶກປາ

ແບບປະສົມ
ຫ້ອງສມຸດ

● ຈົບ ●

...ີ ປາກປາສັກ ການພິມ 9-11 ຖນົນຟ້າງຸ່ມ ແຄມຂອງ ວຽງຈັນ ໂທຣ 2262



# ປະວັດຫຍໍ້

*ຈັນ ອິນທຸພິລາສ* ເກີດເມື່ອວັນທີ່ ໑໘ ຕຸລາ ໒໔໖໑/໑໙໑໘ ສອບໄດ້ນັກທັມຊັ້ນເອກ ແລະມະຫາ ຝ່ປໂຍກ ທີ່ບາງກອກປະເທດໄທ ຢູ່ໃນສົມມະເພດ (ຈົວແລະພຣະ) ໑໙ ປີ.

໑໙໕໒ ເຂົ້າເຮັດຣາຊການ ໃນກະຊວງສຶກສາທິການລາວ

໑໙໕໓ ເຂົ້າຮັບໃຊ້ໃນກອງທັບແຫ່ງຊາດ ນຶ່ງປີຫົກເດືອນ.

໑໙໕໔ ຢູ່ໃນກອງບັນນາທິການ ຜູ່ກໍ່ຕັ້ງໜັງສືພິມສຶກສາທິການ.

໑໙໕໕ ເປັນຜູ່ຂຽນ ສຸພາສິດ ຄຳກອນປະກອນປະຈຳວັນຂອງ
ກະຊວງຖແລງຂ່າວ—ໂຄສະນາການ

໑໙໕໗–໖໐ ເປັນຜູ່ຊ່ອຍບັນນາທິການ ໜັງສືເມືອງລາວຣາຍເດືອນ

໑໙໖໒ ເປັນອາຈານສອນໃນວິທຍາລັຍວຽງຈັນເປັນເວລາ ໑໑ ປີ.

໑໙໗໒–໗໓ ຢູ່ໃນກອງບັນນາທິການ ແລະຂຽນຄໍລັມປະຈຳໃນໜັງສື
ພິມໄຜ່ໜາມ ຣາຍເດືອນ, ແລະວຽງຈັນໂພສຕ໌ ຣາຍວັນ.

໑໙໗໓ ຂຽນຄຳກອນປະຈຳໃນ ນ.ສ.ພ. ນາງຣາຍໄຕຣມາສ.

*ນິສັຍ* ມັກຂຽນເຣື່ອງສາຣະຄະດີແລະຄຳກອນ ໃນຊີວິດໄດ້
ແຕ່ງບົດກອນທັ້ງສັ້ນແລະຍາວແລ້ວປະມານ ໓໐໐໐ ບົດ